ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສູນກາງອົງການພຸດທະສາສະໜາສຳພັນ
ແຫ່ງ ສປປ ລາວ
ກົມມາທິການສາທາຣະນູປະການ

ເລກທີ...28../ກສປ
ນະຄອນຫຼວງວຽງຈັນ, ວັນທີ...26...ມິຖຸນາ 2026

# ໜັງສືລາຍງານ

**ນ້ອມນະມັດສະການ**: ພຣະອາຈານຫົວໜ້າຫ້ອງການບໍລິຫານງານ ສູນກາງ ອພສ ທີ່ນັບຖືຢ່າງສູງ.

**ເລື່ອງ**: ປະກອບຄຳເຫັນ ກ່ຽວກັບການສ້າງສູນວັດທະນະທຳ ແລະ ວັດເສົາຫຼີນ ຂອງແຫ່ງພູຊົງຊານ ສປ ຈີນ ທີ່ຈະສ້າງຢູ່ເຂດເສດຖະກິດສາມຫຼ່ຽມຄຳ, ເມືອງຕົ້ນເຜິ້ງ, ແຂວງບໍ່ແກ້ວ ແລະ ສ້າງວັດເສົາຫຼີນ ຢູ່ເຂດເສດຖະກິດພິເສດບຶງທາດຫຼວງ, ເມືອງໄຊເສດຖາ, ນະຄອນຫຼວງວຽງຈັນ.

- ອີງຕາມ ທຳມະນູນສົງລາວ (ສະບັບປັບປຸງ) ສະບັບເລກທີ 96/ອພສ, ລົງວັນທີ 15 ທັນວາ 2022
- ອີງຕາມ ສະໂນດນຳສົ່ງ ເລກທີ 516/ຫກ, ລົງວັນທີ 25 ມິຖຸນາ 2026.
- ອີງຕາມ ພາລະບົດບາດ, ສິດ ແລະ ໜ້າທີ່ ຂອງກົມມາທິການສາທາຣະນູປະການ ສູນກາງ ອພສ

ກົມມາທິການສາທາຣະນູປະການ ສູນກາງອົງການພຸດທະສາສະໜາສັມພັນແຫ່ງ ສປປ ລາວ ຂໍນ້ອມນະມັດການແຈ້ງຜົນການຄົ້ນຄວ້າ ກ່ຽວກັບໂຄງການກໍ່ສ້າງສູນວັດທະນະທຳ ຂອງວັດເສົາຫຼີນແຫ່ງພູຊົງຊານ ສປ ຈີນ ທີ່ຈະສ້າງຢູ່ເຂດເສດຖະກິດສາມຫຼ່ຽມຄຳ ເມືອງຕົ້ນເຜິ້ງ ແຂວງບໍ່ແກ້ວ ແລະ ສ້າງວັດເສົາຫຼີນ ຢູ່ເຂດເສດຖະກິດພິເສດບຶງທາດຫຼວງ ເມືອງໄຊເສດຖາ ນະຄອນຫຼວງວຽງຈັນ ມາຍັງພຣະອາຈານໃຫ້ຊາບວ່າ: ຜ່ານການຄົ້ນຄວ້າ, ພິຈາລະນາ ແລະ ປຶກສາຫາລື ແມ່ນມີຄວາມເຫັນດີເປັນເອກະພາບຮ່ວມກັບພາກສ່ວນຕ່າງໆ ທີ່ກ່ຽວຂ້ອງ ເຫັນວ່າ: ໂຄງການຈັດສ້າງສູນວັດທະນະທຳດັ່ງກ່າວ ແມ່ນຕິດພັນກັບນິກາຍຝ່າຍມະຫາຍານ, ແຕ່ທຳມະນູນສົງລາວ ສະບັບປັດຈຸບັນ ແມ່ນໄດ້ກຳນົດຂອບເຂດການນຳໃຊ້ ແລະ ມີຜົນບັງຄັບໃຊ້ສະເພາະ ພຣະສົງເຖຣະວາດໃນ ສປປ ລາວ ເທົ່ານັ້ນ, ໂດຍບໍ່ໄດ້ກວມລວມ ເຖິງການປົກປ້ອງ ແລະ ຄຸ້ມຄອງພຣະສົງນິກາຍອື່ນ ຕະຫຼອດຮອດບັນດາສາສະໜາອື່ນໆ ທີ່ເຄື່ອນໄຫວ ແລະ ດຳເນີນກິດຈະກຳ ຢູ່ພາຍໃນ ສປປ ລາວ.

ເພື່ອຮັບປະກັນໃຫ້ການປົກປ້ອງ ແລະ ຄຸ້ມຄອງການເຄື່ອນໄຫວທາງດ້ານສາສະໜາ ຢູ່ ສປປ ລາວ ໂດຍສະເພາະແມ່ນການກໍ່ສ້າງສູນວັດທະນະທຳວັດເສົາຫຼີນ ໃຫ້ໄດ້ຮັບການຈັດຕັ້ງປະຕິບັດຢ່າງເປັນລະບົບ, ມີປະສິດທິພາບ, ຖືກຕ້ອງຕາມແນວທາງນະໂຍບາຍ ຂອງພັກ-ລັດ ແລະ ສອດຄ່ອງກັບສະພາບຄວາມເປັນຈິງ ຂອງສັງຄົມໃນປັດຈຸບັນ; ກົມມາທິການສາທາຣະນູປະການ ສູນກາງ ອພສ ຈຶ່ງຂໍສະເໜີມາຍັງ ພຣະອາຈານຫົວໜ້າຫ້ອງການບໍລິຫານງານ ສູນກາງ ອພສ ພິຈາລະນາ ແລະ ປະສານງານ ຫຼື ມອບໝາຍໃຫ້ກົມສາສະໜາ ສູນກາງແນວລາວສ້າງຊາດ, ກົມຊົນເຜົ່າ ແລະ ສາສະໜາ ສຳນັກງານນາຍົກລັດຖະມົນຕີ ໃນ

ບານຂະແໜງການລັດ ທີ່ມີພາລະບົດບາດ, ສິດ ແລະ ໜ້າທີ່ໂດຍກົງ ໃນການປົກປ້ອງ ແລະ ຄຸ້ມຄອງລັດຕໍ່ການເຄື່ອນໄຫວສາສະໜາ ຢູ່ ສປປ ລາວ ໄດ້ພິຈາລະນາ, ຄົ້ນຄວ້າ ແລະ ວາງກົນໄກ ຫຼື ລະບຽບການຄຸ້ມຄອງເພີ່ມຕື່ມ ຕາມຄວາມເໝາະສົມດ້ວຍ.

ດັ່ງນັ້ນ, ຈຶ່ງສະເໜີມາຍັງພຣະອາຈານໄດ້ພິຈາລະນາຕາມ ສົມຄວນດ້ວຍ.

**ຮອງຫົວໜ້າກັມມາທິການສາທາຣະນູປະການ**

ພຣະອາຈາຣຍ໌ ບຸນເສີຍ ເພົາພາສິດ

ຫ້ອງການ ກັມມາທິການສາທາຣະນູປະການ ສູນກາງອົງການພຸດທະສາສະໜາສຳພັນ ແຫ່ງ ສປປ ລາວ ສຳນັກງານ ຕັ້ງຢູ່ທີ່ ວັດພຣະທາດຫຼວງເໜືອ ເມືອງໄຊເສດຖາ ນະຄອນຫຼວງວຽງຈັນ. ໂທ: 020 28037351, 020 52377714, Gmail: tcrswcbfol@gmail.com

ດ່ວນ

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ສູນກາງອົງການພຸດທະສາສະໜາສຳພັນ
ແຫ່ງ ສປປ ລາວ
ຫ້ອງການບໍລິຫານງານ

ເລກທີ: 516 /ຫກ
ນະຄອນຫຼວງວຽງຈັນ, ວັນທີ 25 ມິຖຸນາ 2026

# ສະໃບດນຳສົ່ງ

**ນະມັດສະການ: ພຣະອາຈານ ບຸນທະວີ ປະສິດທິສັກ ຮອງປະທານ, ຫົວໜ້າກົມມາທິການສາທາຣະນຸປະການ ສູນກາງ ອພສ ທີ່ເຄົາຣົບ.**

**ເອກະສານທີ່ສົ່ງປະກອບມີ:**

| ລດ | ເນື້ອໃນຫຍໍ້ຂອງເອກະສານ | ຈຳນວນ | ໝາຍເຫດ |
|---|---|---|---|
| 1. | ໜັງສືສະເໜີການສ້າງສູນວັດທະນະທຳ ຂອງວັດເສົາຫຼິນ ແຫ່ງພູຊິງຊານ ສປ ຈີນ, ທີ່ຈະສ້າງຢູ່ເຂດເສດຖະກິດສາມຫຼ່ຽມຄຳ ເມືອງຕົ້ນເຜິ້ງ ແຂວງບໍ່ແກ້ວ. | 2 ສະບັບ | ນິມົນຄົ້ນຄວ້າພິຈາລະນາບັນດາເອກະສານທີ່ກ່ຽວຂ້ອງ. ຈາກນັ້ນ ລາຍງານມາຍັງຫ້ອງການບໍລິຫານງານເພື່ອດຳເນີນການທາງດ້ານເອກະສານໃນຂັ້ນຕອນຕໍ່ໄປ. |

ນະມັດສະການມາດ້ວຍຄວາມເຄົາລົບ

**ຫົວໜ້າຫ້ອງການບໍລິຫານງານ**

ສູນກາງອົງການພຸດທະສາສະໜາສຳພັນ ແຫ່ງ ສປປ ລາວ ຫ້ອງການບໍລິຫານງານ

**ພຣະອາຈານ** ອະທິປະໄຕ ໄມຕີຈິດ

ສູນກາງ ອພສ
ຂາເຂົ້າ ເລກທີ 104
ວັນທີ 25/6/2026

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ
ກົມເລຂາ

ເລກທີ 30 /ກລຂ
ນະຄອນຫຼວງວຽງຈັນ, ວັນທີ 24.6.2026

# ໜັງສືທາງລັດຖະການ

**ຮຽນ:** ນ້ອມນະມັດສະການ ທ່ານຫົວໜ້າຫ້ອງການ ສູນກາງອົງການພຸດທະສາສະໜາສຳພັນ ແຫ່ງ ສປປ ລາວ ທີ່ນັບຖື.

**ເລື່ອງ:** ປະກອບຄຳເຫັນ ກ່ຽວກັບການສະເໜີສ້າງສູນວັດທະນະທຳ ແລະ ວັດເສົາຫຼັກ ຂອງວັດເສົາຫຼັກ ແຫ່ງພູຊົງຊານ ສປ ຈີນ.

- ອີງຕາມ ຂໍ້ຕົກລົງ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ກົມເລຂາ ສະບັບເລກທີ 377/ຫສນຍ, ລົງວັນທີ 03 ມິຖຸນາ 2022;
- ອີງຕາມ ດຳລັດ ວ່າດ້ວຍການຄຸ້ມຄອງ ແລະ ປົກປ້ອງການເຄື່ອນໄຫວສາສະໜາ ຢູ່ ສປປ ລາວ ສະບັບເລກທີ 315/ລບ, ລົງວັນທີ 16 ສິງຫາ 2016;
- ອີງຕາມ ສະໂໜດນຳສົ່ງ ຫ້ອງການຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ ສະບັບເລກທີ 007/ຫລທ.3, ລົງວັນທີ 07 ມັງກອນ 2026.

ກົມເລຂາ ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ຂໍຖືເປັນກຽດ ນ້ອມນະມັດສະການ ສະເໜີມາຍັງ ຫົວໜ້າ ຫ້ອງການ ສູນກາງອົງການພຸດທະສາສະໜາສຳພັນ ແຫ່ງ ສປປ ລາວ ເພື່ອມີຄຳເຫັນ ກ່ຽວກັບການສະເໜີສ້າງຕັ້ງສູນ ວັດທະນະທຳເສົາຫຼັກ ຢູ່ເຂດເສດຖະກິດສາມຫຼ່ຽມຄຳ ເມືອງຕົ້ນເຜິ້ງ ແຂວງບໍ່ແກ້ວ ແລະ ສ້າງວັດເສົາຫຼັກ ຢູ່ເຂດ ເສດຖະກິດພິເສດບຶງທາດຫຼວງ ເມືອງໄຊເສດຖາ ນະຄອນຫຼວງວຽງຈັນ.
(ໄດ້ມີເອກະສານກ່ຽວຂ້ອງ ຄັດຕິດມາພ້ອມນີ້).

ດັ່ງນັ້ນ, ຈຶ່ງນະມັດສະການ ສະເໜີມາຍັງ ຫົວໜ້າ ຫ້ອງການສູນກາງອົງການພຸດທະສາສະໜາສຳພັນ ແຫ່ງ ສປປ ລາວ ເພື່ອພິຈາລະນາ ຕາມເນື້ອໃນໜັງສືທາງລັດຖະການສະບັບນີ້ດ້ວຍ.

**ຫົວໜ້າກົມເລຂາ**

ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ກົມເລຂາ

ໂຈມ ຂະທຸມພົມ

**ບ່ອນນຳສົ່ງ:**
1. ຫ້ອງການສູນກາງອົງການພຸດທະສາສະໜາສຳພັນ ແຫ່ງ ສປປ ລາວ 1 ສະບັບ;
2. ເກັບມ້ຽນ 1 ສະບັບ.

ວັດເສົາຫຼິນ ແຫ່ງພຸຊິງຊານ ສປ ຈີນ
ຂາເຂົ້າ ເລກທີ: 004
ວັນທີ: 03 OCT 2025

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ
ຫ້ອງການ

# ບົດບັນທຶກ

## ກອງປະຊຸມປຶກສາຫາລືທາງດ້ານວິຊາການກ່ຽວກັບການສະເໜີຂໍສ້າງຕັ້ງວັດເສົາຫຼິນ ປະຈຳ ສປປ ລາວ ຢູ່ເຂດ ເສດຖະກິດພິເສດສາມຫຼ່ຽມຄຳ ແຂວງບໍ່ແກ້ວ ແລະ ເຂດເສດຖະກິດພິເສດບຶງທາດຫຼວງ ນະຄອນຫຼວງວຽງຈັນ ຂອງວັດເສົາຫຼິນແຫ່ງພຸຊິງຊານ ສປ ຈີນ ຄັ້ງວັນທີ 29 ກັນຍາ 2025

- ອີງຕາມ ກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ ສະບັບເລກທີ 62/ສພຊ, ລົງວັນທີ 28 ມິຖຸນາ 2024;
- ອີງຕາມ ດຳລັດວ່າດ້ວຍເຂດເສດຖະກິດພິເສດ ສະບັບເລກທີ 188/ລບ, ລົງວັນທີ 07 ມິຖຸນາ 2018;
- ອີງຕາມ ຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະ ເຄື່ອນໄຫວຂອງ ຫ້ອງການຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ ສະບັບເລກທີ 030/ຄລທ, ລົງວັນທີ 18 ສິງຫາ 2025;
- ອີງຕາມ ໜັງສືສະເໜີຂອງຄະນະຄຸ້ມຄອງເຂດເສດຖະກິດພິເສດສາມຫຼ່ຽມຄຳ ສະບັບເລກທີ 781/ອຄຂສ, ລົງວັນທີ 02 ກໍລະກົດ 2025;
- ອີງຕາມ ໜັງສືສະເໜີຂອງຄະນະຄຸ້ມຄອງເຂດເສດຖະກິດພິເສດບຶງທາດຫຼວງ ສະບັບເລກທີ 1313/ຄຂສພ.ນວ, ລົງວັນທີ 15 ສິງຫາ 2025;
- ອີງຕາມ ໜັງສືສະເໜີຂອງຜູ້ຕາງໜ້າວັດເສົາຫຼິນແຫ່ງພຸຊິງຊານ ສປ ຈີນ ສະບັບເລກທີ 002/ສຫຼຊຊ.ສປປຈີນ, ລົງວັນທີ 11 ສິງຫາ 2025.

ໃນຕອນບ່າຍເວລາ 14:00 ໂມງ ຂອງວັນທີ 29 ກັນຍາ 2025 ຫ້ອງການຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ (ຫລທ) ໄດ້ຈັດກອງປະຊຸມປຶກສາຫາລື ທາງດ້ານວິຊາການກ່ຽວກັບການສະເໜີຂໍສ້າງຕັ້ງວັດເສົາຫຼິນ ປະຈຳ ສປປ ລາວ ຢູ່ເຂດເສດຖະກິດພິເສດສາມຫຼ່ຽມຄຳ ແຂວງບໍ່ແກ້ວ ແລະ ເຂດເສດຖະກິດພິເສດບຶງທາດຫຼວງ ນະຄອນຫຼວງວຽງຈັນ ຂອງວັດເສົາຫຼິນແຫ່ງພຸຊິງຊານ ສປ ຈີນ. ໂດຍການເປັນປະທານ ຂອງທ່ານ ພູວຽງ ເຫຼົ້າພາສີ ຮອງຫົວໜ້າຫ້ອງການຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ ມີຕາງໜ້າຈາກອົງການພຸດທະສາສະໜາສຳພັນ ແຫ່ງ ສປປ ລາວ, ກົມແຜນການ ແລະ ການຮ່ວມມື ແລະ ກົມມໍລະດົກ ກະຊວງວັດທະນາທຳ ແລະ ການທ່ອງທ່ຽວ, ກົມກິລາມວນຊົນ ພະລະ ແລະ ສິລະປະສຶກສາ, ກະຊວງສຶກສາທິການ ແລະ ກິລາ, ກົມຊົນເຜົ່າ ແລະ ສາສະໜາ, ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ, ຫ້ອງການຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ ນະຄອນຫຼວງວຽງຈັນ, ອົງການຄຸ້ມຄອງ-ບໍລິຫານ ເຂດເສດຖະກິດພິເສດ ສາມຫຼ່ຽມຄຳ ເຂົ້າຮ່ວມຜ່ານລະບົບທາງໄກ (ZOOM), ບໍລິສັດດອກງິ້ວຄຳ ຈຳກັດ, ບໍລິສັດລາວທາດຫຼວງພັດທະນາ ຈຳກັດ, ຜູ້ຕາງໜ້າວັດເສົາຫຼິນແຫ່ງພຸຊິງຊານ ສປ ຈີນ ແລະ ຜູ້ຕາງໜ້າຫ້ອງການຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ.

ຈຸດປະສົງການສະເໜີ **1)** ສ້າງສູນວັດທະນາທຳ ຢູ່ເຂດເສດຖະກິດພິເສດສາມຫຼ່ຽມຄຳ ເພື່ອສົ່ງເສີມທາງດ້ານສິນລະປະມວຍຈີນລະດັບສູງ (ມວຍກັງຟູ), ການນັ່ງສະມະທິຊານ ແລະ ການແລກປ່ຽນວັດທະນາທຳຈີນ-ລາວ ຊຶ່ງສະຖານທີ່ຕັ້ງດັ່ງກ່າວ ມີເນື້ອທີ່ 1,866 ແມັດກາເລ ໄດ້ແບ່ງອອກເປັນ 2 ສ່ວນຄື: ເນື້ອທີ່ຕັ້ງສູນ 286 ແມັດກາເລ, ສະໜາມຝຶກຊ້ອມ 1,580 ແມັດກາເລ ມູນຄ່າການລົງທຶນ 5000-50,000,000 ໂດລາສະຫະລັດ. **2)** ສ້າງວັດເສົາຫຼິນ ຢູ່



สแกนด้วย CamScanner

ເຂດເສດຖະກິດພິເສດບຶງທາດຫຼວງ ເພື່ອສ້າງໃຫ້ກາຍເປັນຈຸດດຶງດູດການແລກປ່ຽນທາງດ້ານພຸດທະສາສະໜາເປັນສະຖານທີ່ພັກຜ່ອນຍ່ອນໃຈ, ພ້ອມທັງຈະກາຍເປັນສະຖານທີ່ດຶງດູດຜູ້ຄົນຈາກພາຍໃນ ແລະ ຕ່າງປະເທດ ທີ່ມີຄວາມສົນໃຈທາງດ້ານ ສິນລະປະມວຍຈີນ (ກັງຟູ) ການຝຶກສາມະທິຊານ ຊຶ່ງວັດດັ່ງກ່າວຈະກາຍເປັນເປັນສະຖານທີ່ທ່ອງທ່ຽວທາງດ້ານວັດທະນະທຳ ຊຶ່ງສະຖານທີ ດັ່ງກ່າວມີເນື້ອທີ່ 54,423 ແມັດກາເລ ໄດ້ແບ່ງອອກເປັນ 3 ສ່ວນຄື: ເນື້ອທີ່ຕັ້ງວັດ 15,382 ແມັດກາເລ, ບໍລິເວນວັດ 31,660 ແມັດກາເລ, ເສັ້ນທາງພາຍໃນວັດເນື້ອທີ່ 7 ແມັດກາເລ ມີມູນຄ່າການລົງທຶນ: 50,000,000-200,000,000 ໂດລາສະຫະລັດ. ຕາມການສະເໜີຂອງຜູ້ຕາງໜ້າຈາກວັດເສົາຫຼີນແຫ່ງພຸຊີງຊານ ສປ ຈີນ ໂດຍ ທ່ານ ກົວຊີຊຽງ (Guo XIXiang) ແມ່ນມີຄວາມພ້ອມທາງດ້ານສະຖານທີ ທີ່ໄດ້ຮັບການສະໜັບສະໜູນຈາກຜູ້ພັດທະນາເຂດເສດຖະກິດພິເສດບຶງທາດຫຼວງ ແລະ ເຂດເສດຖະກິດພິເສດສາມຫຼ່ຽມຄຳ, ສ່ວນການນຳໃຊ້ທີ່ນຕົວຈິງນັ້ນ ຫຼັງຈາກໄດ້ຮັບອະນຸຍາດຢ່າງຖືກຕ້ອງຈາກທາງການ ຂອງ ສປປ ລາວ ແລ້ວ ຜູ້ຕາງໜ້າຈາກວັດເສົາຫຼີນ ຈຶ່ງຈະສະເໜີລາຍງານວັດເສົາຫຼີນແຫ່ງພຸຊີງຊານ ສປ ຈີນ ເພື່ອຂໍອະນຸມັດທຶນຮອນເຂົ້າມາກໍ່ສ້າງ ຊຶ່ງຮູບແບບການລົງທຶນດັ່ງກ່າວເປັນອົງການຈັດຕັ້ງທີ່ບໍ່ຫວັງຜົນກຳໄລ.

**ຜ່ານການຮັບຟັງການສະເໜີຂອງຜູ້ຕາງໜ້າຈາກວັດເສົາຫຼີນ ແຫ່ງພູຊີງຊານ ສປ ຈີນ ກອງປະຊຸມກໍ່ໄດ້ສຸມໃສ່ ປຶກສາຫາລື ແລກປ່ຽນຄຳຄິດຄຳເຫັນ ຊຶ່ງກອງປະຊຸມໄດ້ເຫັນດີເປັນເອກະພາບດັ່ງນີ້:**

1. ດ້ານຫຼັກການແລ້ວກອງປະຊຸມເຫັນດີສະໜັບສະໜູນກ່ຽວກັບການສະເໜີຂໍສ້າງຕັ້ງສູນວັດທະນາທຳເສົາຫຼີນ ຢູ່ເຂດ ເສດຖະກິດພິເສດສາມຫຼ່ຽມຄຳ ແຂວງບໍ່ແກ້ວ ແລະ ວັດເສົາຫຼີນ ຢູ່ເຂດເສດຖກິດພິເສດບຶງທາດຫຼວງ ນະຄອນຫຼວງວຽງຈັນ ຂອງວັດເສົາຫຼີນແຫ່ງພຸຊີງຊານ ສປ ຈີນ ຊຶ່ງຈະເປັນການສົ່ງເສີມແລກປ່ຽນທາງດ້ານວັດທະນາທຳ ແລະ ຊຸກຍູ້ແກ່ການທ່ອງທ່ຽວ;
2. ສະເໜີໃຫ້ຜູ້ພັດທະນາ ຂສພ ສາມຫຼ່ຽມຄຳ ແລະ ຜູ້ພັດທະນາ ຂສພ ບຶງທາດຫຼວງ ຢັ້ງຢືນຄືນພື້ນທີ່ຕົວຈິງ ທີ່ຈະສະໜອງໃນການສ້າງວັດ ແລະ ສູນວັດທະນາທຳເສົາຫຼີນ ເພື່ອບໍ່ໃຫ້ເກີດການທັບຊ້ອນ ພ້ອມທັງສະເໜີໃຫ້ຜູ້ຕາງໜ້າວັດເສົາຫຼີນປັບປຸງບົດວິພາກເສດຖະກິດເຕັກນິກຕື່ມ ເປັນຕົ້ນ: ກິດຈະການຂອງວັດ, ກິດຈະການສູນວັດທະນາທຳ, ທຶນຮອນທີ່ຈະນຳມາສ້າງ ແລະ ພັດທະນາ, ວິທີການຄຸ້ມຄອງນຳໃຊ້ທຶນຮອນທີ່ລະດົມມາໄດ້ ແລະ ລາຍລະອຽດອື່ນໆ ທີ່ຕິດພັນໃຫ້ຄົບຖ້ວນ.
3. ສະເໜີໃຫ້ຂະແໜງການທີ່ກ່ຽວຂ້ອງປະກອບຄຳເຫັນເປັນລາຍລັກອັກສອນ ເພື່ອແຈ້ງຕອບມາຍັງ ຫລທ ຕາມໜັງສືຂໍການປະກອບຄຳເຫັນ ສະບັບເລກທີ 030/ຫລທ,ລົງວັນທີ 2 ກັນຍາ 2025 ເພື່ອເປັນຂໍ້ມູນໃນການຄົ້ນຄວ້າລາຍງານຂັ້ນເທິງພິຈາລະນາຕາມຂັ້ນຕອນ ແລະ ລະບຽບການ.

ດັ່ງນັ້ນ, ຈຶ່ງໄດ້ສ້າງບົດບັນທຶກສະບັບນີ້ໄວ້ເປັນບ່ອນອີງໃນການລາຍງານຂັ້ນເທິງ ເພື່ອຂໍທິດຊີ້ນຳ.

**ປະທານກອງປະຊຸມ**

**ພູວຽງ ເຫງົ້າພາສີ**

**ຜູ້ບັນທຶກ**

ນ. ເພັດຈຳແອມ ໄຊຍະພານທອງ



สแกนด้วย CamScanner

# ໃບລົງທະບຽນ

ກອງປະຊຸມປຶກສາຫາລືກ່ຽວກັບການ ສະເໜີຂໍສ້າງຕັ້ງວັດເສົາຫຼີນ ປະຈໍາ ສປປ ລາວ ຢູ່ເຂດ ເສດຖະກິດພິເສດສາມຫຼ່ຽມຄໍາ ແຂວງບໍ່ແກ້ວ ແລະ ເຂດເສດຖະກິດພິເສດບຶງ ທາດຫຼວງ ນະຄອນຫຼວງວຽງຈັນ ຂອງວັດເສົາຫຼີນແຫ່ງພູຊີງຊານ ສປ ຈີນ ຄັ້ງວັນທີ 29 ກັນຍາ 2025

| ລ/ດ | ຊື່ ແລະ ນາມສະກຸນ | ຕໍາແໜ່ງ | ພາກສ່ວນ | ໂທລະສັບ | ລາຍເຊັນ |
|---|---|---|---|---|---|
| 1 | ທ່ານ [illegible] | ຮອງຫົວໜ້າ | ທລຂທ. | | [signature] |
| 2 | ທ່ານ ປທ.[illegible] | ຮອງຫົວໜ້າກົມ | [illegible] | 96609789 | [signature] |
| 3 | ທ. [illegible] | ຫົວໜ້າພະແນກ | ກົມແຜນການ ແລະ [illegible] | 29980030 | [signature] |
| 4 | ທ. [illegible] | [illegible] | [illegible] | 55555013 | [signature] |
| 5 | [illegible] | | | 13397811555 | [signature] |
| 6 | [illegible] | | | | [signature] |
| 7 | [illegible] | | ບ/ສ ລາວ ທາດຫຼວງ | 15987187057 | [signature] |
| 8 | ນ. ວັນພອນ ໄຊຍະຈັກ | | ບ/ສ ລາວທາດຫຼວງ | 020-22441445 | [signature] |
| 9 | ທ່ານ ລໍາພອນ [illegible] | ຮອງພ/ນ | [illegible] | 55566591 | [signature] |
| 10 | [illegible] | [illegible] | [illegible] | 54616599 | [signature] |
| 11 | ນ. [illegible] | ຮອງພ/ນ | [illegible] | 22498929 | [signature] |
| 12 | ນ. [illegible] | ຮອງພ/ນ | [illegible] | 55666449 | [signature] |
| 13 | [illegible] | ຮອງຫົວໜ້າກົມ | [illegible] | 23051477 | [signature] |
| 14 | ທ. [illegible] | ຫົວໜ້າພະແນກ | ທລຂທ. | 22204325 | [signature] |

สแกนด้วย CamScanner

| | | | | | |
|---|---|---|---|---|---|
| 15 | ນ. ສົມພະມິຈິນ ໄຊຍະໄພ | ຮອງ ຫລກ.ພງ | ຫລກ. ພງ. | 99479090 | |
| 16 | ທ.ວັລະສັຍ ຫຼວງລາດ | ຮອງພະແນກ | ພອສ 3 | 55111629 | |
| 17 | ນ.ເພັດວໍ່ແພງລົມໄຊຍະພານທອງ | ຮອງພະແນກ | ຫລຂທ 3 | 23828608 | |
| 18 | | | | | |
| 19 | | | | | |
| 20 | | | | | |
| 21 | | | | | |
| 22 | | | | | |
| 23 | | | | | |
| 24 | | | | | |
| 25 | | | | | |
| 26 | | | | | |
| 27 | | | | | |
| 28 | | | | | |
| 29 | | | | | |
| 30 | | | | | |
| 31 | | | | | |
| 32 | | | | | |

- ສູນວັດທະນະທຳເສົາຫຼິນອັງກິດ ໄດ້ຈັດກິດຈະກຳ





- ສູນວັດທະນະທຳເສົາຫຼິນໃນບາເຊໂລນາ, ປະເທດສະເປນ, ໄດ້ຈັດກິດຈະກຳສຳຜັດປະສົບການ





## 1.2 ຈຸດປະສົງເປົ້າໝາຍ

- ເພື່ອເພີ່ມທະວີສາຍພົວພັນມິດຕະພາບ ແລະ ການແລກປ່ຽນວັດທະນະທຳ ລະຫວ່າງ ສປປ ລາວ ແລະ ສປ ຈີນ.
- ເພື່ອການສືບທອດ ແລະ ສົ່ງເສີມ ສິນລະປະການຕໍ່ສູ້ມວຍຈີນ (ກັງຟູເສົາຫຼິນ) ທີ່ເປັນມໍລະດົກທາງວັດ ທະນະທຳທີ່ຈັບຕ້ອງບໍ່ໄດ້ລະດັບຊາດຂອງ ສປ ຈີນ, ເຊິ່ງມີປະຫວັດສືບທອດມາເປັນເວລາ 1520 ປີ ໃຫ້ ດຳລົງຢູ່ແກ່ຄົນ ລຸ້ນໃໝ່.
- ພັດທະນາບຸກຄະລາກອນພຣະສົງ ໃຫ້ສາມາດເວົ້າໄດ້ທັງພາສາຈີນ-ລາວ ແລະ ມີທັກສະໃນການປ້ອງກັນໂຕໂດຍແມ່ນສິລະປະການຕໍ່ສູ້ກັງຟູ.
- ເປັນສູນກາງການທ່ອງທ່ຽວດ້ານວັດທະນາທຳ, ການຝຶກອົບຮົມສິລະປະການຕໍ່ສູ້ກັງຟູ, ການຝຶກສະມາທິຊານໃນການດູແລສຸຂະພາບ, ການແພດແຜນຈີນ, ການຈັດສະແດງສິລະປະ ແລະ ການແຂ່ງຂັນສິລະປະການຕໍ່ສູ້ທີ່ສາມາດດຶງດູດນັກທ່ອງທ່ຽວຈາກທົ່ວໂລກ.
- ເພື່ອຜະລິດ ແລະ ແປຮູບຢາພາຍໃນປະເທດ ໂດຍແມ່ນການນຳໃຊ້ຕຳລາຢາທີ່ເປັນສູດລັບຂອງເສົາຫຼິນ ມາປະສົມ ກັບສະໝຸນໄພທຳມະຊາດຂອງປະເທດລາວ ທີ່ໄດ້ຮັບການຮ່ວມມືກັບກະຊວງສາທາລະນາສຸກ.
- ສົ່ງເສີມໃຫ້ມີຈຸດເດັ່ນການທ່ອງທ່ຽວ ດ້ານວັດທະນາທຳສາກົນ ແລະ ສ້າງຊື່ສຽງໃຫ້ເຂດເສດຖະກິດພິເສດບຶງທາດຫຼວງ.

## II. ຊື່ໂຄງການ ແລະ ຈຸດທີ່ຕັ້ງຂອງໂຄງການ

**ຊື່ໂຄງການ:** ວັດເສົາຫຼິນ ປະຈຳ ສປປ ລາວ

**Project name:** The Shaolin Temple of Lao PDR

**ກິດຈະການ:** ວັດ (ປະເພດອົງການຈັດຕັ້ງທີ່ບໍ່ສະແຫວງຫາຜົນກຳໄລ)

**ຜູ້ໄດ້ຮັບມອບສິດຂໍສ້າງຕັ້ງ:**

- ຊື່ ແລະ ນາມສະກຸນ: ທ່ານ ກົວ ຊີຊຽງ (Guo Xixiang), ອາຍຸ: 57 ປີ, ສັນຊາດ: ຈີນ, ອາຊີບ: ພະອາຈານ (ຜູ້ຖືກແຕ່ງຕັ້ງ ຈາກ ວັດເສົາຫຼິນ ແຫ່ງພູຊົງຊານ ສປ ຈີນ).
- ເບີໂທຕັ້ງໂຕະ/ມືຖື +86 13397811555 Wechat ID: sls13397811555
- ທີ່ຢູ່ປັດຈຸບັນ: ໂຮງຮຽນສາມຫຼ່ຽມຄຳ, ເຂດເສດຖະກິດພິເສດສາມຫຼ່ຽມຄຳ, ເມືອງຕົ້ນເຜິ້ງ, ແຂວງບໍ່ແກ້ວ.
- ທີ່ຢູ່ຕ່າງປະເທດ: ເມືອງນານນິງ ເຂດປົກຄອງຕົນເອງກວ່າງຊີຈ້ວງ ສປ ຈີນ



**ທີ່ຕັ້ງໂຄງການ**

ປັດຈຸບັນປະເທດລາວໄດ້ຈັດຕັ້ງເຂດເສດຖະກິດພິເສດເປັນ 21 ເຂດ ໂດຍມີເປົ້າໝາຍເພື່ອສົ່ງເສີມການລົງທຶນພັດທະນາອຸດສາຫະກຳການທ່ອງທ່ຽວ ແລະ ການຄ້າລະຫວ່າງປະເທດ. ໂຄງການແມ່ນຕັ້ງຢູ່ໃນເຂດເສດຖະກິດພິເສດບຶງທາດຫຼວງ, ນະຄອນຫຼວງວຽງຈັນ. ຢູ່ລະຫວ່າງເສັ້ນ ຂະໜານທີ່ 17°57'10.3" N ແລະ ເສັ້ນແວງ 102°39'35.8" E ສໍາລັບ ສະຖານທີ່ໃນການຕັ້ງວັດເສົາຫຼີນ ປະຈຳ ສປປ ລາວ ແມ່ນ ໄດ້ຮັບການສະໜັບສະໜູນຈາກ ບໍລິສັດ ລາວ ທາດຫຼວງ ລົງທຶນ ພັດທະນາ ຈຳກັດ ເຊິ່ງເປັນຜູ້ພັດທະນາເຂດເສດຖະກິດພິເສດບຶງທາດຫຼວງນະຄອນຫຼວງວຽງຈັນ, ສປປ ລາວ. ລາຍລະອຽດດັ່ງລຸ່ມນີ້:

**ຮູບ: ຂອບເຂດເນື້ອທີ່ນຳໃຊ້ໃນການສ້າງຕັ້ງວັດເສົາຫຼີນ ປະຈຳ ສປປ ລາວ, ເຂດເສດຖະກິດພິເສດບຶງທາດຫຼວງ**




## III. ຮູບແບບການລົງທຶນ

### 1. ຮູບແບບການລົງທຶນຂອງໂຄງການ

ຮູບແບບການລົງທຶນແມ່ນ ເປັນປະເພດອົງການຈັດຕັ້ງທີ່ບໍ່ສະແຫວງຫາຜົນກຳໄລ.

### 2. ແຫຼ່ງທີ່ມາເງິນທຶນຂອງໂຄງການ

ເງິນທຶນຂອງໂຄງການສ່ວນໃຫຍ່ໄດ້ຮັບຈາກ ການບໍລິຈາກຂອງຜູ້ທີ່ມີຈິດສັດທາທັງພາຍໃນ ແລະ ຕ່າງປະເທດ ລວມເຖິງເງິນຈາກກິດຈະກຳການກຸສົນຕ່າງໆ. ໃນໄລຍະເລີ່ມຕົ້ນຂອງໂຄງການ ເງິນທຶນຫຼັກໄດ້ມາຈາກການບໍລິຈາກຂອງຜູ້ສັດທາໃນສູນວັດທະນາທຳເສົາຫຼີນ, ການບໍລິຈາກຜູ້ມີຈິດສັດທາທາງສັງຄົມ, ການບໍລິຈາກຈາກສູນວັດທະນາທຳເສົາຫຼີນກວ່າ 160 ແຫ່ງທົ່ວໂລກ, ແລະ ຈາກສິດເສົາຫຼີນກວ່າ 60 ລ້ານຄົນ. ນອກຈາກນີ້, ຍັງໄດ້ຮັບການສະໜັບສະໜູນຈາກມູນນິທິພຸດທະສາສະໜາຊາດຂອງຈີນ, ຄະນະກຳມະການບໍລິຫານກອງທຶນພັດທະນາວັດທະນາທຳພຸດທະສາດສະໜາຈີນ, ວັດເສົາຫຼີນ ແລະ ມູນນິທິອື່ນໆ. ລວມເຖິງການສະໜັບສະໜູນຈາກບໍລິສັດຕ່າງໆເຊັ່ນ: ບໍລິສັດ ລາວ ທາດຫຼວງ ລົງທຶນ ພັດທະນາ ຈຳກັດ, ກຸ່ມບໍລິສັດ ດອກງິ້ວຄຳ ຈຳກັດ, ແລະ ພັນທະມິດທຸລະກິດໃນສັງຄົມ ແລະ ອົງການຕ່າງໆ ຮ່ວມມືກັນໃນການສະໜັບສະໜູນທາງການເງິນ ເພື່ອການກໍ່ສ້າງໂຄງການ ແລະ ກິດຈະກຳຕ່າງໆ.

## IV. ແຜນການພັດທະນາກິດຈະການຂອງວັດເສົາຫຼິນ

ແຜນການຫຼັກຂອງວັດເສົາຫຼິນ ປະຈຳ ສປປ ລາວ ແມ່ນ ການເຜີຍແຜ່ ແລະ ສົ່ງເສີມວັດທະນາທຳເສົາຫຼິນ 5 ດ້ານ ຄື: ຊານ (ວິປັດສະນາ), ອູ່ (ສິລະປະການຕໍ່ສູ້), ອີ (ການແພດ), ເຢົາ (ສະໝຸນໄພ) ແລະ ອີ່ (ສິລະປະ). ລວມທັງການຈັດກິດຈະກຳທາງສາສະໜາເຊັ່ນ: ງານວັນວິສາຂະບູຊາ ເທດສະການສົງນ້ຳພຣະ, ພິທີອຸລຳພະນະ ງານສາດຈີນ, ພິທີສັດຕະມະຫາສະຖານ ເປັນຕົ້ນ, ເພື່ອໃຫ້ພຸດທະສາສະນິກະຊົນໄດ້ມາ ສັກກະລະຂໍພອນ, ພ້ອມທັງການດຳເນີນງານດ້ານ ການບໍລິຈາກເພື່ອການກຸສົນ ແລະ ກິດຈະກຳສາທາລະປະໂຫຍດປະເພດຕ່າງໆ.

## V. ແຜນການດຳເນີນກິດຈຳກຳ

ແຜນນີ້ມີຈຸດປະສົງເພື່ອອາໄສຂໍ້ໄດ້ປຽບທາງທີ່ຕັ້ງ ຂອງເຂດເສດຖະກິດພິເສດບຶງທາດຫຼວງ ໃນການສ້າງວັດທີ່ລວມຫຼາຍກິດຈະກຳໄວ້ນຳກັນ (ວັດເສົາຫຼິນ ປະຈຳ ສປປ ລາວ) ເຊິ່ງປະກອບມີ: ການແລກປ່ຽນວັດທະນາທຳ, ການຝຶກອົບຮົມສິລະປະການຕໍ່ສູ້ກັງຟູ, ການຝຶກສະມາທິຊານໃນການດູແລສຸຂະພາບ, ການສົ່ງເສີມການແພດແຜນຈີນ ແລະ ການຈັດສະແດງສິລະປະ, ເພື່ອສົ່ງເສີມການປະສົມປະສານ ວັດທະນາທຳຈີນ-ລາວ ແລະ ສະໜັບສະໜູນຄວາມຮ່ວມມືດ້ານວັດທະນາທຳ ແລະ ມະນຸດສະທຳໃນໂຄງການ "ໜຶ່ງແລວໜຶ່ງເສັ້ນທາງ"

**ການພັດທະນາແປງອອກເປັນ 10 ແຜນຫຼັກຄື:**

1) **ວັດທະນາທຳທີ່ລວມການຝຶກສະມາທິຊານ ແລະ ການດູແລສຸຂະພາບ**

- **ສູນຝຶກສະມາທິຊານ:** ຈັດຕັ້ງຫ້ອງຝຶກສະມາທິ ເປີດຫຼັກສູດຝຶກສະມາທິໄລຍະສັ້ນ ເພື່ອດຶງດູດຊາວຕ່າງຊາດທີ່ສົນໃຈໃນການຝຶກສະມາທິໃຫ້ມາຮ່ວມກິດຈະກຳ.
- **ການແລກປ່ຽນວັດທະນາທຳພຸດທະສາດສະໜາ:** ຈັດເວທີສົນທະນາລະຫວ່າງຈີນ-ລາວ, ບັນຍາຍສາດສະໜາ, ເຊີນພຣະອາວຸໂສມາສະແດງທຳ, ເພື່ອສົ່ງເສີມການມີສ່ວນຮ່ວມລະຫວ່າງວົງການພຸດທະສາດສະໜາ ຂອງ ທັງສອງປະເທດ.
- **ການພັດທະນາບຸກຄະລາກອນພຣະສົງ:** ເພື່ອໃຫ້ຄວາມປາດຖະນາຂອງອາດີດພຣະສັງຄະລາດຂອງລາວເປັນຈິງ, ທີ່ຢາກໃຫ້ມີການຈັດຕັ້ງ "ວິທະຍາໄລພຸດທະສາດສະໜາຈີນ-ລາວ" ເພື່ອພັດທະນາບຸກຄະລາກອນທາງພຸດທະສາດສະໜາທີ່ຈະສາມາດ ໄດ້ທັງພາສາຈີນ-ລາວ ແລະ ຮ່ວມຝຶກຝົນພຣະສົງໃຫ້ມີທັກສະໃນການປ້ອງກັນໂຕໃນການຮຽນສິລະປະການຕໍ່ສູ້ກັງຟູ.



## 2) ວັດທະນາທຳທີ່ລວມການຝຶກສະມາທິຊານ ແລະ ສິລະປະການຕໍ່ສູ້ກັງຟູ

- **ສູນຝຶກສິລະປະການຕໍ່ສູ້:** ເປີດຫຼັກສູດສອນກັງຟູເສົາຫຼິນ, ເປີດຮັບສະໝັກນັກຮຽນຈາກປະເທດລາວ ແລະ ປະເທດໃນອາຊຽນ ເພື່ອຝຶກອົບຮົມ ແລະ ພັດທະນາເປັນຄູສອນສິລະປະການຕໍ່ສູ້.
- **ຄະນະສະແດງສິລະປະການຕໍ່ສູ້:** ຈັດຕັ້ງທີມງານມືອາຊີບ ເພື່ອຈັດງານ "ເທດສະການສະມາທິຊານ ແລະ ສິລະປະການຕໍ່ສູ້ຈີນ-ລາວ" ເປັນປະຈຳທຸກປີ ໂດຍມີການສະແດງກັງຟູເສົາຫຼິນ.
- **ການແຂ່ງຂັນສິລະປະການຕໍ່ສູ້:** ຈັດການແຂ່ງຂັນ "ສິລະປະການຕໍ່ສູ້ເສົາຫຼິນໃນລາວ" ໂດຍເຊີນຜູ້ເຂົ້າແຂ່ງຂັນຈາກຫຼາຍປະເທດ ເພື່ອໃຫ້ຄົນທົ່ວໂລກຮູ້ຈັກລາວຫຼາຍຂຶ້ນ.



## 3) ວັດທະນາທຳທີ່ລວມການຝຶກສະມາທິຊານ ແລະ ການບຳບັດຮັກສາ

- **ຄລີນິກແພດແຜນຈີນແບບສະມາທິຊານເສົາຫຼິນ:** ໃຫ້ບໍລິການຮັກສາແຜນຈີນດັ້ງເດີມເຊັ່ນ: ການນວດກົດຈຸດ, ການຝັງເຂັມ ແລະ ການບຳບັດດ້ວຍສະມາທິ ເພື່ອດູແລປະຊາຊົນໃນທ້ອງຖິ່ນ ແລະ ນັກທ່ອງທ່ຽວ.
- **ສູນດູແລສຸຂະພາບ ແລະ ບຳລຸງຮ່າງກາຍ:** ປະສົມປະສານການຝຶກສະມາທິຊານ ກັບ ການບຳບັດຕາມແພດແຜນຈີນ ເປີດໂຄງການ "ການພັກຜ່ອນເພື່ອສຸຂະພາບໂດຍໃຊ້ວິທີຝຶກສະມາທິແບບຊານ" ເພື່ອດຶງດູດ ກຸ່ມລູກຄ້າລະດັບສູງ.
- **ການແລກປ່ຽນທາງການແພດ:** ຮ່ວມມືກັບສະຖາບັນການແພດແຜນບູຮານຂອງລາວ ເພື່ອສຶກສາ ຮ່ວມກັນ ກ່ຽວກັບລະບົບທິດສະດີຢາຂອງການແພດເສົາຫຼິນ ເພື່ອປະຍຸກເຂົ້າໃນຄລີນິກ ແລະ ການພັດທະນາໃນຍຸກປັດຈຸບັນ.



4) ວັດທະນາທຳທີ່ລວມການຝຶກສະມາທິຊານ ແລະ ຢາ

- **ຮ້ານຂາຍຢາສະໝຸນໄພເສົາຫຼີນ:** ນຳເຂົ້າສູດຢາລັບຂອງເສົາຫຼີນ ເຊັ່ນ: ຢາສະໝຸນໄພຈີນ ແລະ ຊາສະໝຸນໄພ ເພື່ອເຜີຍແຜ່ວັດທະນະທຳການແພດແຜນຈີນ.
- **ແຫຼ່ງປູກສະໝຸນໄພຈີນ:** ທົດລອງປູກສະໝຸນໄພຈີນ ໃນພື້ນທີ່ບໍລິເວນ ເຂດເສດຖະກິດພິເສດບຶງທາດຫຼວງເພື່ອສົ່ງເສີມການຜະລິດໃນທ້ອງຖິ່ນ.
- **ການຮ່ວມມືດ້ານການແພດ ແລະ ການຢາ:** ຮ່ວມມືກັບກະຊວງສາທາລະນາສຸກຂອງປະເທດລາວ ເພື່ອສົ່ງເສີມການໃຊ້ຕຳລາຢາ ຂອງເສົາຫຼີນ ມາປະສົມກັບ ສະໝຸນໄພທຳມະຊາດຂອງລາວໃນການຜະລິດ ແລະ ແປຮູບພາຍໃນປະເທດ ພ້ອມທັງນຳໄປສູ່ການປະຍຸກໃຊ້ໃນລະດັບສາກົນ ເພື່ອສ້າງປະໂຫຍດຕໍ່ປະຊາຊົນຢ່າງຍັ້ງຢືນ.




5) ວັດທະນາທຳທີ່ລວມການຝຶກສະມາທິຊານ ແລະ ສິລະປະ

- **ພິພິທະພັນ ສະແດງສິລະປະ ແລະ ການຝຶກສະມາທິຊານ:** ຈັດສະແດງງານພາບວາດ ແລະ ອັກສອນການຂຽນພູ່ກັນຈີນ, ປະຕິມາກຳ ແລະ ດົນຕີພຸດຂອງເສົາຫຼີນ ລວມເຖິງສິລະປະດັ້ງເດີມອື່ນໆ.
- **ການພັດທະນາຜະລິດຕະພັນວັດທະນາທຳທີ່ສ້າງສັນ:** ເປີດຕົວຜະລິດຕະພັນຕໍ່ຍອດຈາກແບຣນ ເສົາຫຼີນ (ເຊັ່ນ: ຊຸດປະຕິບັດທຳແບບຊານ, ລູກປະຄຳພຣະ, ເຄື່ອງຫຼີ້ນກັງຟູ ແລະ ອື່ນໆ) ເພື່ອເພີ່ມສັກກາຍະພາບໃນການສ້າງລາຍໄດ້ທາງທຸລະກິດ.
- **ການທ່ອງທ່ຽວວັດທະນາທຳທີ່ສະຫງົບ ແລະ ການຝຶກສະມາທິຊານ:** ເຊື່ອມໂຍງທິວທັດຂອງ ບຶງທາດຫຼວງ ສ້າງໝູ່ບ້ານນ້ອຍໆທີ່ສະຫງົບຝຶກສະມາທິຊານ, ໂປຣແກຣມທ່ອງທ່ຽວປະສົບການມາປະຕິບັດທຳ ແລະ ຝຶກສິລະປະການຕໍ່ສູ້ແບບພຣະເສົາຫລິນ 1 ມື້, ຄ້າຍຝຶກສະມາທິ ແລະ ສຸຂະພາບແບບຊານ, ການສ້າງສັນສິລະປະທາງພຸດທະສາສະໜາ ແລະ ພັດທະນາອຸດສາຫະກຳການທ່ອງທ່ຽວດ້ານວັດທະນາທຳ.





**6) ກິດຈະກຳສາທາລະນະປະໂຫຍດ**

ວັດເສົາຫຼິນ ປະຈຳ ສປປ ລາວ ຮ່ວມມືກັບ ສາມາຄົມການກຸສົນໃນທ້ອງຖິ່ນ, ສາມາຄົມສາສະໜາ ແລະ ໜ່ວຍງານອື່ນໆ ຈັດກິດຈະກຳສາທາລະນະປະໂຫຍດເປັນແຕ່ລະໄລຍະ (ເຊັ່ນ: ການກວດຮັກສາສຸຂະພາບຟຣີແບບແພດແຜນຈີນທີ່ລວມເອົາສະມາທິ, ຝັງເຂັມ, ສະໝຸນໄພ ແລະ ການດູແລສຸຂະພາບແບບລວມ, ການບໍລິຈາກສິ່ງຂອງ, ອາຫານ, ເງິນທຶນ ຫຼື ອຸປະກອນ ແລະ ຊ່ວຍສ້ອມແປງບ້ານໃຫ້ຜູ້ຍາກຈົນ) ເພື່ອປະຕິບັດຕາມແນວຄິດ "ເຊື່ອມໂຍງດ້ວຍຄວາມຮັກ ທົ່ວໂລກເປັນຄອບຄົວດຽວກັນ" ແລະ ມີເປົ້າໝາຍເຜີຍແຜ່ແນວຄິດຄວາມເມດຕາ, ຄວາມກົມກຽວ, ຄວາມສາມັກຄີ ແລະ ຄວາມເທົ່າທຽມ ຈາກວັດທະນາທຳເສົາຫຼິນ ໃຫ້ຊາວບ້ານໃນທ້ອງຖິ່ນໄດ້ຮັບຜົນປະໂຫຍດຈາກສິ່ງເຫຼົ່ານັ້ນ.






**7) ກິດຈະກຳເຮັດບຸນແຈກທານ**

ຈັດກິດຈະກຳເຮັດບຸນຕາມລະດູການ ແລະ ເທດສະການຕ່າງໆ ເຊັ່ນ: ການລ້ຽງອາຫານຮ້ອນໃນວັນຄຣິດສະມາສການແຈກເຂົ້າຕົ້ມບຸນ, ການແຈກອາຫານມັງວະວິລັດ ໂດຍພິເສດ "ການແຈກເຂົ້າຕົ້ມລ້າປາ ຫຼື ເຂົ້າຕົ້ມທັນຍາພືດ" ເຊິ່ງຈັດໃນວັນທີ 08 ເດືອນທັນວາ ຕາມປະຕິທິນຕີຈີນ ເພື່ອລະນຶກເຖິງວັນທີ່ພຣະພຸດທະເຈົ້າໄດ້ຕັດສະຣູ້ໃຕ້ຕົ້ນໂພຫຼັງຈາກບຳເພັນພຽງຢ່າງໜັກເປັນເວລາ 6 ປີ, ພຣະອົງເຄີຍໄດ້ຮັບເຂົ້າຕົ້ມຈາກຜູ້ຍິງລ້ຽງງົວ ເພື່ອສັນອາຫານກ່ອນຕັດສະຣູ້, ດັ່ງນັ້ນໃນວັນທີ 08 ເດືອນທັນວາ ຂອງທຸກປີ, ວັນພຸດທະສາສະໜາຈະຕົ້ມເຂົ້າຈາກທັນຍາພືດ 5 ຊະນິດ , ເພື່ອແຈກໃຫ້ປະຊາຊົນໂດຍບໍ່ເກັບຄ່າໃຊ້ຈ່າຍ. ທຸກປີໃນວັນທີ 10 ມັງກອນ (ວັນທີ່ອາດມີການປ່ຽນແປງໄດ້ໃນແຕ່ລະປີ) ເຊິ່ງຕົງກັບວັນທີ 08 ເດືອນ ທັນວາ ຈັນທຣະຄະຕິໄດ້ຈັດກິດຈະກຳແຈກ "ເຂົ້າຕົ້ມລ້າປາເສົາຫຼິນ ຫຼື ເຂົ້າຕົ້ມທັນຍາພືດເສົາຫຼິນ" ເພື່ອລະນຶກເຖິງການຕັດສະຣູ້ຂອງພຣະພຸດທະເຈົ້າ ໃຫ້ປະຊາຊົນໄດ້ກິນເຂົ້າຕົ້ມດ້ວຍຄວາມຍິນດີ ເພື່ອຮັບຄວາມສຸກທາງໃຈ ແລະ ສ້າງສາຍສຳພັນທີ່ດີໃນສັງຄົມ.



**8) ກິດຈະກຳງານວັນວິສາຂະບູຊາ ເທດສະການສົງນ້ຳພຣະ**

ງານວິສາຂະບູຊາ ເທດສະການສົງນ້ຳພຣະ ຫຼື ເອີ້ນວ່າ: ວັນປະສູດຂອງພຣະພຸດທະເຈົ້າ, " ພິທີສົງນ້ຳພຣະ" ແມ່ນງານປະເພນີພຸດທະສາສະໜາແບບດັ້ງເດີມ ເຊິ່ງຈັດງານໃນມື້ຂຶ້ນ 08 ຄ່ຳ ເດືອນ 04 ຕາມປະຕິທິຈັນທະຣະຄະຕິຈີນ. ໂດຍມີການໃຊ້ນ້ຳຫອມສົ່ງນ້ຳພຣະພຸດທະຮູບ ເພື່ອລະນຶກເຖິງການປະສູດຂອງພຣະພຸດທະເຈົ້າ ແລະ ຍັງມີພິທີກຳອື່ນໆລວມຢູ່ເຊັ່ນ: ການໄຫວ້ພຣະ ແລະ ການຖວາຍທານແກ່ພຣະສົງ.







### 9) ພິທີອຸລຳພະນະ ງານສາດຈີນ

ພິທີອຸລຳພະນະ ງານສາດຈີນ ແມ່ນ ພິທີການພຸດທະສາສະໜານິກາຍມະຫາຍານ ເຊິ່ງຈັດຂຶ້ນທຸກໆປີໃນວັນທີ 15 ເດືອນ 07 ຕາມປະຕິທິນຈັນທະຣະຄະຕິຈີນ ພິທີນີ້ມີຕົ້ນກຳເນີດຈາກ "ພຣະສູດອຸລຳພະນະ" ເປົ້າໝາຍຂອງພິທີນີ້ ແມ່ນເພື່ອເຮັດບຸນ ອຸທິດສ່ວນກຸສົນໃຫ້ແກ່ບັນພະບຸລຸດທີ່ລ່ວງລັບໄປແລ້ວ ໂດຍຕົ້ນຕໍມາຈາກຕຳນານ "ພຣະໂມຄະລານະໄປດມານດາໃຫ້ພົ້ນຈາກຄວາມທຸກທໍລະມານ" ວິທີການຄືການຖວາຍສັງຄະທານແກ່ພຣະສົງ ແລະ ສວດມົນ ເພື່ອອຸທິດບຸນໃຫ້ແກ່ພໍ່ແມ່ ທັງຊາດນີ້ ແລະ ໃນຊາດກ່ອນໆຈົນເຖິງ 7 ຊາດ. ດັ່ງນັ້ນ, ຄວາມໝາຍສຳຄັນທີ່ສຸດຂອງພິທີນີ້ ແມ່ນ "ຄວາມກະຕັນຍູ ແລະ ການຕອບແທນພຣະຄຸນພໍ່ແມ່" ເຊິ່ງເປັນຫຼັກຄຳສອນທີ່ເລິກເຊິ່ງໃນພຸດທະສາສະໜາ ແລະ ມັກຈະຈັດພ້ອມກັບງານບຸນສາດຈີນ.





## 10) ພິທີສັດຕະມະຫາສະຖານ

ພິທີສັດຕະມະຫາສະຖານ ມີຊື່ເຕັມວ່າ "ພິທີບູຊາໃຫຍ່ເພື່ອໂຜດສັດທັງປວງໃນໂລກແຫ່ງພະອໍລະຫັນ ແລະ ປຸຖຸຊົນ" ແມ່ນໜຶ່ງໃນພິທີກຳທາງພະພຸດທະສາສະໜາສາຍຈີນ ທີ່ມີ ຂະໜາດໃຫຍ່ທີ່ສຸດ ແລະ ມີ ອານິສົງສູງສຸດ, ພິທີນີ້ຈະຈັດຕໍ່ເນື່ອງຍາວນານທີ່ສຸດ (ໂດຍປົກກະຕິແມ່ນ 7-49 ມື້) ເຊິ່ງປະກອບດ້ວຍ ພິທີຊັ້ນນອກ ແລະ ພິທີຊັ້ນໃນ. ພິທີຊັ້ນນອກ ຈະແບ່ງອອກເປັນບ່ອນຈັດພິທີຫຼາຍບ່ອນ (ເຊັ່ນ: ທຳມະສາດໃຫຍ່, ທຳມະສາດອະວະຕັງສະກະ ເປັນຕົ້ນ). ພິທີຊັ້ນໃນ ຈະມີພະສົງທີ່ເປັນເຈົ້າພິທີ, ພະສົງຜູ້ດຳເນີນພິທີ, ແລະ ພະສົງຜູ້ຊ່ວຍ ເປັນຜູ້ເບິ່ງແຍງ. ຈຸດປະສົງຫຼັກແມ່ນ ການໂຜດສັບພະສັດໃນພົບພູມທັງ 3 (ນ້ຳ, ບົກ, ອາກາດ) ໂດຍການ ສູດມົນ, ການເຮັດບຸນໃຫ້ທານ ແລະ ພິທີກຳອື່ນໆ ເພື່ອໃຫ້ດວງວິນຍານໄດ້ຮັບການອຸທິດສ່ວນບຸນກຸສົນ.





**ໄລຍະການດຳເນີນງານ**

- **ໄລຍະສັ້ນ: (2ປີ):** ສ້າງອາຄານຫຼັກຂອງວັດໃຫ້ສຳເລັດ ເປີດດຳເນີນການໂຄງການທີ່ກ່ຽວຂ້ອງ ເຊັ່ນ: ສະຖານທີ່ຝຶກອົບຮົມສິລະປະການຕໍ່ສູ້ ແລະ ກິດຈະກຳຝຶກສະມາທິແບບຊານ.
- **ໄລຍະກາງ (2-3ປີ):** ຂະຫຍາຍກິດຈະການໃນດ້ານແພດແຜນໂບຮານ ຜະລິດວັດທະນາທຳແບບຊານ ແລະ ສິລະປະການຕໍ່ສູ້ຮ່ວມເຖິງການສະແດງໂຊດ້ານວັດທະນາທຳແບບຊານ ແລະ ສິລະປະການຕໍ່ສູ້ເພື່ອສ້າງຖານ ນັກທ່ອງທ່ຽວທີ່ໝັ້ນຄົງ ແລະ ສ້າງອິນທິພົນຂອງແບຣນການທ່ອງທ່ຽວທີ່ມີເອກະລັກ.
- **ໄລຍະຍາວ (5ປີຂຶ້ນໄປ):** ສ້າງແບຣນວັດທະນາທຳເສົາຫຼິນໃນອາຊຽນໃຫ້ເປັນທີ່ຮູ້ຈັກ (Shaolin Cultural IP) ພັດທະນາເປັນສູນກາງຂອງວັດທະນາທຳແບບຊານ ແລະ ສິລະປະການຕໍ່ສູ້ແຫ່ງພູມມີພາບ ອາຊຽນ ແລະ ຂະຫຍາຍຜົນໄປຍັງຕະຫຼາດອາຊຽນ.

# V. ຂໍ້ມູນທາງດ້ານເຕັກນິກຂອງໂຄງການ

ວັດເສົາຫຼີນ ປະຈໍາ ສປປ ລາວ ແມ່ນ ນໍາໃຊ້ເນື້ອທີ່ທັງໝົດ 54,423 m2 ໄດ້ແຍກອອກເປັນ 3 ສ່ວນ ຄືວັດເສົາຫຼີນ ມີຂະໜາດເນື້ອທີ 15,382 m2 ແລະ ບໍລິເວນວັດ C1, BR9 ມີຂະໜາດເນື້ອທີ່ 31,660 m2, ທີ່ນທາງ ມີເນື້ອທີ່ 7,381 m2. ເຊິ່ງໄດ້ຮັບການສະໜັບສະໜູນສະຖານທີ່ ສໍາລັບສ້າງຕັ້ງ ວັດເສົາຫຼີນ ປະຈໍາ ສປປ ລາວ ຈາກບໍລິສັດ ລາວ ທາດຫຼວງ ລົງທຶນພັດທະນາ ຈໍາກັດ. ລາຍລະອຽດເນື້ອທີ່ຕາມ ຮູບດັ່ງລຸ່ມນີ້:




ຮູບ: ຂອບເຂດເນື້ອທີ່ນໍາໃຊ້ໃນການສ້າງຕັ້ງວັດເສົາຫຼີນ ປະຈໍາ ສປປ ລາວ ແລະ ບໍລິເວນວັດ

# VI. ຮູບພາບຈໍາລອງການອອກແບບໂຄງການ

## 1. ແຜນຜັງຈໍາລອງແບບໂຄງການໃນມູມສູງ





2. ການສະແດງພາບແບບສະຖາປັດຕະຍະກຳ (ຮູບຈຳລອງອາຄານ)




大雄
五方五佛





## VII ເງິນທຶນໃນການພັດທະນາໂຄງການ

| ລ/ດ | ລາຍການ | ທຶນໃນການພັດທະນາໂຄງການ (ເບື້ອງຕົ້ນ) |
|---|---|---|
| 1 | ວັດເສົາຫຼັກ ປະຈຳ ສປປ ລາວ | 50,000,000-200,000,000 USD |

## VIII. ແຜນການນຳໃຊ້ງົບປະມານ ແລະ ມາດຕະການຄຸ້ມຄອງ

ການບໍລິຫານງົບປະມານຂອງວັດເສົາຫຼັກ ປະຈຳ ສປປ ລາວ ເຂດເສດຖະກິດພິເສດບຶງທາດຫຼວງ ແມ່ນຍຶດຫຼັກຄວາມສາມັກໃຈ, ບໍ່ສະແຫວງຫາຜົນກຳໄລ່, ເປີດເຜີຍ ແລະ ຄວາມໂປ່ງໃສ ພ້ອມຮັບການກວດກາ ຈາກພາກລັດ ແລະ ສັງຄົມ.

1. **ການຈົດທະບຽນຢ່າງຖືກຕ້ອງຕາມກົດໝາຍ**

   ວັດເສົາຫຼັກ ປະຈຳ ສປປ ລາວ ໄດ້ດຳເນີນການຈົດທະບຽນ ແລະ ຂໍອະນຸຍາດຕາມລະບຽບກົດໝາຍ ແລະ ນະໂຍບາຍທີ່ກ່ຽວຂ້ອງຂອງປະເທດລາວ ໂດຍດຳເນີນງານຕາມຂອບເຂດທີ່ໄດ້ຮັບອະນຸຍາດຢ່າງຖືກຕ້ອງ.

2. **ຫຼັກຄວາມໂປ່ງໃສ ແລະ ການເປີດເຜີຍ**

   ການໃຊ້ເງິນບໍລິຈາກຕ້ອງເປັນໄປດ້ວຍຄວາມໂປ່ງໃສ ແລະ ກວດສອບໄດ້. ເງິນທຶນຈະໃຊ້ໃນດ້ານ ການກໍ່ສ້າງ ສະຖານທີ່, ກິດຈະກຳທາງສາສະໜາ, ແລະ ງານການກຸສົນ. ກ່ອນໃຊ້ຈ່າຍຈະຕ້ອງຈັດເຮັດແຜນໃຊ້ຈ່າຍລະອຽດ ແລະ ຜ່ານການອະນຸມັດຈາກຫົວໜ້າວັດ ແລະ ຄະນະກຳມະການບໍລິຫານພາຍໃນ ເພື່ອໃຫ້ແນ່ໃຈວ່າທຸກການ ໃຊ້ເງິນມີຈຸດປະສົງຊັດເຈນ.

3. **ການຈັດຕັ້ງຄະນະກຳມະການບໍລິຫານພາຍໃນ**

   ຄະນະກຳມະການຊຸດນີ້ປະກອບດ້ວຍຕົວແທນຈາກໜ່ວຍງານລັດຖະບານລາວ, ໜ່ວຍງານດ້ານສາດສະໜາ ແລະ ສູນວັດທະນາທຳເສົາຫຼັກ ໂດຍການໃຊ້ງົບປະມານທັງໝົດຕ້ອງໄດ້ຮັບອະນຸຍາດຈາກຄະນະກຳມະການ ເພື່ອໃຫ້ໝັ້ນໃຈວ່າງົບປະມານຖືກນຳໄປໃຊ້ເພື່ອພັດທະນາໂຄງການຈິງ ຫ້າມນຳໄປໃຊ້ຜິດວັດຖຸປະສົງ ຫຼື ເພື່ອ ສະແຫວງຫາກຳໄລສ່ວນຕົວ ວັດຈະເປີດເຜີຍລາຍລະອຽດຄ່າໃຊ້ຈ່າຍເປັນແຕ່ໄລຍະ ເພື່ອເກີດຄວາມໂປ່ງໃສ ແລະ ກວດສອບໄດ້.

4. **ການຈັດຕັ້ງລະບົບຄຸ້ມຄອງດູແລການເງິນພາຍໃນ**

   ວັດຈະຈັດຕັ້ງ ພະແນກການເງິນ ເພື່ອຄວບຄຸມ ແລະ ກວດກາການເງິນຢ່າງລະອຽດ ກຳນົດລະບົບຄ່າຕອບ ແທນທີ່ເໝາະສົມ ມີຂັ້ນຕອນອະນຸມັດທີ່ຊັດເຈນ ແລະ ການລົງບັນຊີທີ່ຖືກຕ້ອງ ໂດຍຈະຢູ່ພາຍໃຕ້ການ ກວດກາຂອງພາກສ່ວນທີ່ກ່ຽວຂ້ອງ.

5. **ແຜນການນຳໃຊ້ງົບປະມານ**

   ທຶນທີ່ລະດົມໄດ້ໃນຂັ້ນເລີ່ມຕົ້ນຂອງໂຄງການຈະໃຊ້ສະເພາະຕາມຈຸດປະສົງ ເຊັ່ນ ການວາງແຜນ, ອອກແບບ, ກໍ່ສ້າງ, ຕົກແຕ່ງ, ຈັດຊື້ອຸປະກອນ, ຈັດກິດຈະກຳທາງສາສະໜາ, ຝຶກອົບຮົມອາສາສະໝັກ ແລະ ບຳລຸງຮັກສາ

ປະຈຳວັນ. ຫ້າມນຳເງິນໄປໃຊ້ໃນທາງອື່ນ ຫຼື ເພື່ອປະໂຫຍດສ່ວນຕົວ ເພື່ອຮັບປະກັນວ່າເງິນຖືກໃຊ້ຢ່າງຖືກຕ້ອງ.

**6. ການເປີດເຜີຍການເງິນ ແລະ ການກວດກາ**

ວັດຈະຈັດຕັ້ງ ການແຈ້ງຂ່າວທາງການເງິນ ເພື່ອເຜີຍແຜ່ຜົນການໃຊ້ເງິນບໍລິຈາກເປັນປະຈຳ ແລະ ຈັດປະຊຸມລາຍງານໃຫ້ຊາວພຸດເຂົ້າຮັບຮູ້. ນອກຈາກນັ້ນຍັງເປີດໃຫ້ກວດກາໂດຍຜູ້ບໍລິຈາກ, ພາກສາສະໜາ, ສື່ມວນຊົນ ແລະ ສັງຄົມທົ່ວໄປ ເພື່ອເພີ່ມຄວາມໂປ່ງໃສ ແລະ ຄວາມໜ້າເຊື່ອຖືໃນການໃຊ້ງົບທຶນ.

## IX. ໂຄງຮ່າງການຈັດຕັ້ງ

**ແຜນໂຄງຮ່າງອົງການຈັດຕັ້ງວັດເສົາຫຼີນ, ເຂດເສດຖະກິດພິເສດບຶງທາດຫຼວງ, ນະຄອນຫຼວງວຽງຈັນ**



**ການນຳໃຊ້ແຮງງານ**

| ລ/ດ | ຕຳແໜ່ງ | ໜ້າທີ່ຮັບຜິດຊອບ | ຈຳນວນ |
|---|---|---|---|
| I | ເຈົ້າອາວາດ | ຜູ້ຮັບຜິດຊອບສູງສຸດຂອງວັດ ດູແລແລະບໍລິຫານວຽກງານພຣະສົງທັງໝົດ ແລະ ເປັນຕົວແທນຂອງວັດໃນການຕິດຕໍ່ກັບພາຍນອກ | 1 |
| 1 | ປະທານຝ່າຍສົງອາວຸດໂສ | ຜູ້ດຳເນີນກິດຈະກຳທາງສາດສະໜາ, ເປັນແບບຢ່າງຂອງພຣະສົງໃນວັດ, ດູແລຄວບຄຸມການຮັກສາສິນ, ມີສະຖານະຮອງຈາກຜູ້ດູແລວັດ | 1 |
| 1.1 | ເປັນແບບຢ່າງໃຫ້ຄະນະສົງ | ຊ່ວຍນຳພຣະສົງທັງໝົດໃນການປະຕິບັດທຳ, ເປັນແບບຢ່າງ ແລະ ຜູ້ນຳທີ່ດີ, ສ້າງພາບລັກທີ່ດີ | 0 |
| 1.2 | ຜູ້ດູແລກວດກາ | ວິທີປະຕິບັດຂອງນິກາຍຫລິນຈີ | 0 |
| 2 | ຝ່າຍບໍລິຫານໂຮງຄົວ | ພຣະສົງທີ່ມີຄວາມຮູ້ ແລະ ຮັບຜິດຊອບໃນການສອນທຳມະ ແລະ ອະທິບາຍ ຕຳແໜ່ງຢູ່ພາຍໃຕ້ຮອງເຈົ້າອາທິການວັດ | 1 |
| 2.1 | ຫົວໜ້າໂຮງຄົວ | ຮັບຜິດຊອບດູແລໂຮງອາຫານ (ສະຖານທີ່ກິນເຂົ້າ) ແລະ ອາຫານຂອງວັດ | 1 |
| 2.1.1 | ອາຫານ | ຮັບປະກັນໃຫ້ວຽກງານອາຫານໃນວັດດຳເນີນການໄປໄດ້ຢ່າງມີລະບຽບ | 2 |
| 2.1.1.1 | ຫົວໜ້າໂຮງຄົວ ນ້ອຍ | ຮັບຜິດຊອບຊ່ວຍດູແລວຽກງານໃນຫ້ອງອາຫານ ລວມທັງຫ້ອງຄົວ ແລະ ຫ້ອງອາຫານ | 3 |

| | | | |
|---|---|---|---|
| 2.1.2 | ຫົວໜ້າໂຮງຄົວ ໃຫຍ່ | ຮັບຜິດຊອບຫຼັກໃນການຈັດການອາຫານ, ຈັດການວັດຖຸຖືກຕ້ອງ, ຈັດການບຸກຄະລາການ ແລະ ວຽກປະຈຳວັນ | 4 |
| 2.2 | ພະແນກຄົວຜັກ | ດູແລຫ້ອງຮັບຮອງພຣະ ແລະ ຮັບຜິດຊອບພຣະທີ່ເດີນທາງສະແຫວງບຸນ | 2 |
| 3 | ທຸລະການ-ປະຕິບັດທຳ | ຮັບຜິດຊອບດູແລຫ້ອງປະຕິບັດທຳ ແລະ ນຳພາພຣະນັ່ງສະມາທິ | 1 |
| 3.1 | ຫຼັກປະຕິບັດ | ດູແລຄວບຄຸມພາບລວມຂອງວັດ ຫຼື ສຳນັກພຣະສົງໃນດ້ານການປະຕິບັດທຳ, ການດຳລົງຊີວິດ ແລະ ການສຶກສາ ລວມເຖິງບັນຍາກາດໂດຍລວມ | 2 |
| 3.1.1 | ເລຂາທິການວັດ | ຮັບຜິດຊອບວຽກເອກະສານ ແລະ ການບັນທຶກແຟ້ມຂໍ້ມູນ | 1 |
| 3.1.1.1 | ຜູ້ບັນທຶກເອກະສານ | ໝາຍເຖິງວຽກງານຈັດການແລະບັນທຶກບັນຊີການເງິນຂອງວັດເປັນຫຼັກ ລວມທັງການບັນທຶກລາຍຮັບ, ລາຍຈ່າຍ ແລະ ຊັບສິນຂອງວັດຢ່າງລະອຽດ ແລະ ການບໍລິຫານຈັດການ | 1 |
| 3.2 | ປະຕິບັດທຳ | ເປັນເປົ້າໝາຍແລະກິດຈະກຳປະຈຳວັນຂອງພຣະສົງຜ່ານການບູຊາ ແລະ ສວດມົນເພື່ອຍົກລະດັບການປະຕິບັດທຳ | 0 |
| 4 | ຫົວໜ້າຫໍທຳ | ຜູ້ດູແລຫ້ອງປະຕິບັດທຳໂດຍກົງ ຮັບຜິດຊອບຄວບຄຸມດູແລ ແລະ ການປະຕິບັດທຳຂອງພຣະສົງ | 1 |
| 4.1 | ຫົວໜ້າພິທີສາດສະໜາ | ດູແລພິທີກຳທາງພຸດທະສາດສະໜາ ຄວບຄຸມຈັງຫວະການສວດມົນ ແລະ ນຳພຣະສົງປະຕິບັດທຳ | 1 |
| 4.1.1 | ຜູ້ດູແລຫໍປະຊຸມ | ຮັບຜິດຊອບການດຳເນີນງານ ແລະ ການບໍລິຫານຈັດການປະຈຳວັນຂອງວັດ ເພື່ອໃຫ້ວັດດຳເນີນໄປຢ່າງປົກກະຕິ ແລະ ພຣະສົງມີຊີວິດການປະຕິບັດທຳທີ່ດີ | 2 |
| 4.1.1.1 | ຫົວໜ້າວິຫານ, ຜູ້ດູແທ່ນບູຊາ | ພິທີກຳ ແລະ ຂໍ້ປະຕິບັດຊາວພຸດທະສາດສະໜາຖືປະຕິບັດໃນຂະນະເຮັດພິທີກຳທາງສາດສະ | 0 |
| 4.1.2 | ພິທີກຳ | ເປັນຜູ້ດູແລຫຼັກຂອງອາຄານໃຫຍ່ ຮັບຜິດຊອບດູແລ ຕະກຽງນ້ຳມັນ, ທູບທຽນ, ຈັດກຽມເຄື່ອງຖະວາຍ ສິ່ງຂອງບູຊາ ແລະ ທຳຄວາມສະອາດພຣະພຸດທະຮູບອາຄານພຣະ ແລະ ງານອື່ນໆ | 3 |
| 4.1.2.1 | ຜູ້ຮັບຜິດຊອບ ລະຄັງ, ກອງໃນວັດ | ຕຳແໜ່ງທີ່ຮັບຜິດຊອບຕີລະຄັງ ແລະ ຕີກອງ ເປັນສ່ວນໜຶ່ງຂອງວັດ | 1 |
| 4.2 | ຜູ້ຄວບຄຸມລະບຽບສົງ | ຄວບຄຸມດູແລການຮັກສາສິນ ແລະ ພຶດຕິກຳຂອງພຣະສົງ | 2 |
| 4.2.1 | ຜູ້ຮັບຜິດຊອບ ແກ້ໄຂເຫດຫຍຸ້ງຍາກໃນວັດ | ວິທີການໄກ່ເກ່ຍ ລະຫວ່າງວັດທະນາທຳທາງສາດສະໜາ ທາງສັງຄົມ ແລະ ກົດເກນທາງກົດໝາຍ ມີຄຸນຄ່າ ແລະ ຄວາມສຳຄັນເປັນພິເສດ | 4 |
| 5 | ລູກສິດ | ເລຂານຸການຂອງເຈົ້າອາທິການວັດ ດູແລເອກະສານ ແລະ ຕາປະທັບ | 3 |
| 5.1 | ວຽກເອກະສານ | ຮັບຜິດຊອບຫຼັກໃນການສ້າງສັນງານຂຽນ ການແກ້ໄຂ ແລະ ງານປະສາສຳພັນ | 1 |
| 5.2 | ການເງິນ | ຮັບຜິດຊອບການຮັບຈ່າຍເງິນສົດປະຈຳວັນ, ກວດນັບເງິນສົດໃນກ່ອງເຮັດບຸນ ແລະ ນຳຝາກທະນາຄານ | 2 |
| 5.3 | ຜູ້ຊ່ວຍວຽກປະຈຳວັນ | ຊ່ວຍເຫຼືອຜູ້ຮັບຜິດຊອບກຸຕິ ຫຼື ຫົວໜ້າຝ່າຍອື່ນໆ ໃນການດຳເນີນງານ | 1 |
| 6 | ຜູ້ຈັດການວັດ(ພະອາຈານໃຫຍ່) | ຜູ້ຮັບຜິດຊອບວຽກບໍລິຫານຂອງວັດ ເຊັ່ນ: ກຳກັບດູແລດ້ານການເງິນ, ການກໍ່ສ້າງ ແລະ ກິດຈະກຳທົ່ວໄປໃນຊີວິດປະຈຳວັນ | 1 |
| 6.1 | ຫົວໜ້າຜູ້ດູແລວັດ | ເປັນຜູ້ດູແລບໍລິຫານວັດ ຊ່ວຍເຈົ້າອະທິການວັດໃນດ້ານການຈັດການຕ່າງໆຂອງວັດ | 2 |
| 6.1.1 | ພະແນກສະໜັບສະໜູນອົງກອນ | ຈັດຊື້ ແລະ ບໍລິຫານວັດສະດຸ ຫຼື ສິ່ງຂອງ, ການບຳລຸງຮັກສາສິ່ງຂອງ, ຄວາມສະອາດງາມຕາຂອງສະພາບແວດລ້ອມ, ການຈັດການໂຮງອາຫານ | 6 |
| 6.1.1.1 | ໂຄງສ້າງພື້ນຖານ | ຜູ້ຄຸ້ມຄອງວັດ, ເຈົ້າໜ້າທີ່ຝ່າຍສະໜັບສະໜູນ, ຊ່າງນ້ຳ ແລະ ໄຟຟ້າ, ເຈົ້າໜ້າທີ່ຄວາມປອດໄພ | 8 |
| 6.1.1.2 | ພະແນກທົ່ວໄປ | ການປະສານງານທົ່ວໄປ,ການບໍລິຫານງານເອກະສານ, ການສະໜັບສະໜູນດ້ານວຽກເອກະສານ, ວຽກຕ້ອນຮັບ, ແລະ ຄວາມສະອາດຂອງສະພາບແວດລ້ອມ | 10 |

| | | | |
|---|---|---|---|
| 6.1.1.3 | ຫ້ອງປະຖົມພະຍາບານ | ໃຫ້ບໍລິການທາງການແພດ, ການກູ້ໄພການແພດສຸກເສີນ, ການຈັດຫາຢາ ແລະ ການສຶກສາດ້ານສຸຂະພາບ | 4 |
| 6.1.2 | ພະແນກໜ່ວຍທຸລະກິດ | ຝ່າຍການກຸສົນ, ຝ່າຍດຳເນີນທຸລະກິດ, ຝ່າຍສື່ມວນຊົນ, ຝ່າຍແລກປ່ຽນວັດທະນະທຳ, ຝ່າຍປູກຝັງ ແລະ ຝ່າຍຄວາມປອດໄພ. | 8 |
| 6.1.2.1 | ໂຮງເຈ | ມີການບໍລິການຈັດລ້ຽງອາຫານເຈເປັນຫຼັກໃນບັນຍາກາດງຽບສະຫງົບ, ອາຫານສ່ວນຫຼາຍເຮັດມາຈາກຜະລິດຕະພັນຈາກຖົ່ວເຫຼືອງທີ່ຮຽນແບບເນື້ອສັດ, ມີເອກະລັກ ແລະ ຄວາມໝາຍທາງວັດທະນະທຳ | 6 |
| 6.1.2.2 | ຈຸດຈຳໜ່າຍ | ການຈຳໜ່າຍສິນຄ້າທີ່ໃຊ້ໃນກິດຈະກຳທາງສາດສະໜາ, ຈັດສັນຊັບພະຍາກອນໃນຄັງ, ເຜີຍແຜ່ວັດທະນາທຳ, ຈັດການລາຍຮັບລາຍຈ່າຍ | 4 |
| 6.1.3 | ຄວາມປອດໄພ | ຜູ້ຮັບຜິດຊອບດ້ານຄວາມປອດໄພ, ຄະນະເຮັດວຽກຄວາມປອດໄພ, ການກວດກາລະບົບດັບເພີງ, ເຈົ້າໜ້າທີ່ຮັກສາຄວາມປອດໄພ, ຫ້ອງຄວບຄຸມກ້ອງວົງຈອນປິດ | 6 |
| 6.1.4 | ສຳນັກງານວັດທະນະທຳ ແລະ ການສຶກສາ | ຜູ້ຊ່ວຍຝ່າຍ, ຫົວໜ້າຝ່າຍປະຊາສຳພັນ ແລະ ວັດທະນາທຳ, ຫົວໜ້າຝ່າຍການສຶກສາ, ບັນນາທິການ(ຜູ້ຮຽບຮຽງເນື້ອຫາເອກະສານທຳມະ, ສື່ປະຊາສຳພັນ, ເນື້ອຫາທາງການສຶກສາ) | 9 |
| 6.1.4.1 | ຫ້ອງສະໝຸດ | ຜູ້ດູແລຫ້ອງພະໄຕປີດົກ(ຄັງເອກະສານທຳມະ), ຫົວໜ້າຄັງທຳມະ, ບັນນາລັກ(ຜູ້ດູແລເອກະສານ), ເປັນຄູອາຈານໃນສູນການຮຽນຮູ້ຂອງວັດ | 10 |
| 6.1.4.2 | ຄະນະເຜີຍແຜ່ທຳມະ | ເຜີຍແຜ່ທຳມະ, ສົ່ງເສີມພຸດທະສາດສະໜາ, ແນະນຳຍາດໂຍມໃນການປະຕິບັດທຳ, ຈັດກິດຈະກຳການກຸສົນ ແລະ ສາທາລະນະປະໂຫຍດ | 9 |
| 6.1.4.3 | ຫ້ອງເກັບເອກະສານ | ການຈັດການເອກະສານ ແລະ ວັນນະກຳທຳມະ, ການຈັດລະບຽບແຟ້ມຂໍ້ມູນ, ການບໍລິຫານຈັດການຂໍ້ມູນ | 4 |
| 6.1.5 | ພະແນກບຸກຄະລາກອນ | ການວາງແຜນຊັບພະຍາກອນບຸກຄົນ, ວຽກເອກະສານທົ່ວໄປ, ປະສານງານ ແລະ ສື່ສານ | 5 |
| 6.2 | ການເງິນ | ແມ່ນຝ່າຍທົ່ວໄປ, ຮັບຜິດຊອບວຽກປະຈຳວັນຂອງວັດ ເຊັ່ນ ວຽກເອກະສານ, ການເງິນ ແລະ ບຸກຄະລາກອນ. | 4 |
| 6.2.1 | ຄັງສິນຄ້າ | ຜູ້ດູແລຄັງພັດສະດຸ,ມີບົດບາດສຳຄັນໃນການຈັດການ ແລະ ໃຊ້ສອຍວັດສະດຸສິ່ງຂອງຂອງວັດຢ່າງມີປະສິດຕິພາບ ເພື່ອໃຫ້ກິດຈະກຳຕ່າງໆພາຍໃນວັດດຳເນີນໄປຢ່າງຮຽບຮ້ອຍ | 3 |
| 6.2.2 | ບັນຊີ | ເຮັດເອກະສານສຳຄັນທາງບັນຊີ, ກວດສອບເອກະສານ ແລະ ຊ່ວຍກຽມ ຈັດເກັບ ແລະ ດູແລຮັກສາເອກະສານທາງບັນຊີ ແລະ ການເງິນ | 2 |
| 6.2.3 | ຈັດຊື້ | ຮັບຜິດຊອບການຈັດຊື້, ເຈົ້າໜ້າທີ່ຈັດຊື້ | 4 |
| 6.2.4 | ຫ້ອງເກັບເຄື່ອງວັດຖຸບູຮານ | ຫ້ອງເກັບຮັກສາບູຮານວັດຖຸ ເຊິ່ງຈະຢູ່ໃນຄວາມຮັບຜິດຊອບຂອງຜູ້ດູແລຮັກສາບູຮານວັດຖຸ | 7 |
| 7 | ພະແນກຕ້ອນຮັບ | ຕ້ອນຮັບແຂກຈາກພາຍນອກ ແລະ ປະສານງານຕິດຕໍ່ກັບໜ່ວຍງານພາຍນອກ | 1 |
| 7.1 | ຫ້ອງຮັບແຂກ | ຕ້ອນຮັບແຂກຜູ້ມາຢ້ຽມຢາມ ທັງຄາລະວາດ ແລະ ພະຖຸດົງ ພ້ອມທັງຮັບຜິດຊອບການປະສານງານຂອງແຕ່ລະຝ່າຍໃນວັດ, ການລົງເວລາເຮັດວຽ. ແລະ ລະບຽບວິໄນຂອງພຣະສົງ ລວມທັງການບໍລິຫານຈັດການສາລາຕ່າງໆພາຍໃນວັດ. | 4 |
| 7.2 | ພະແນກຈຳໜ່າຍບັດ | ໜ້າທີ່ຮັບຜິດຊອບຢູ່ພາຍໃຕ້ຝ່າຍຕ້ອນຮັບ ແລະ ຮັບແຂກ | 6 |
| 7.3 | ພະແນກປະສານງານຕ່າງປະເທດ | ມີໜ້າທີ່ໃນການລວບລວມ ແລະ ບໍລິຫານຈັດການຊັບພະຍາກອນດ້ານສື່ມວນຊົນ ແລະ ໜ່ວຍງານພາຍນອກອື່ນໆ ເພື່ອວາງແຜນ ແລະ ດຳເນີນກົນລະຍຸດປະຊາສຳພັນດ້ານວັດທະນະທຳຂອງວັດ | 4 |
| ລວມ | | | 168 |

# X. ຜົນປະໂຫຍດຂອງໂຄງການທີ່ມີຕໍ່ລັດ:

ລັດຈະໄດ້ຮັບຜົນປະໂຫຍດຈາກໂຄງການສ້າງວັດເສົາຫຼີນ ປະຈຳ ສປປ ລາວ ປະກອບມີ: ທາງກົງ ແລະ ທາງອ້ອມ

1. **ຜົນປະໂຫຍດທາງກົງ**

- ລາຍໄດ້ຈາກການທ່ອງທ່ຽວເຊັ່ນ: ພາສີມູນຄ່າເພີ່ມ(VAT) ຈາກນັກທ່ອງທ່ຽວ ທີ່ເດີນທາງມາທ່ຽວຊົມ ຈະມີຄ່າໃຊ້ຈ່າຍໃນພື້ນທີ່ເຊັ່ນ: ຄ່າທີ່ພັກ, ຄ່າອາຫານ, ຄ່າຂອງທີ່ລະນຶກ, ເຊິ່ງທັງໝົດນີ້ຈະສ້າງ ລາຍໄດ້ຈາກ ພາສີມູນຄ່າເພີ່ມໃຫ້ກັບລັດຖະບານ.
- ອາກອນລາຍໄດ້ຈາກນິຕິບຸກຄົນ ກໍຄືທຸລະກິດໃໝ່ໆທີ່ຈະເກີດຂຶ້ນ ເພື່ອຮັບຮອງການທ່ອງທ່ຽວເຊັ່ນ: ໂຮງແຮມ, ລີສອດ, ຮ້ານອາຫານ, ບໍລິສັດນຳທ່ຽວ, ຮ້ານຂາຍຂອງທີ່ລະນຶກ ຈະຕ້ອງເສຍອາກອນນິຕິບຸກ ຄົນໃຫ້ກັບ ລັດຖະບານ.
- ອາກອນລາຍໄດ້ບຸກຄົນທົ່ວໄປ ເຊັ່ນ ການຈ້າງງານທີ່ເພີ່ມຂຶ້ນໃນທຸລະກິດເຫຼົ່ານີ້ ໝາຍເຖິງຈຳນວນ ຜູ້ເສຍພາສີ ລາຍໄດ້ບຸກຄົນທີ່ເພີ່ມຂຶ້ນດ້ວຍ.

2. **ຜົນປະໂຫຍດທາງອ້ອມ**

- ເປັນການສ້າງວຽກເຮັດງານທຳ, ຫຼຸດຜ່ອນບັນຫາວ່າງງານ.
- ຍົກລະດັບຄຸນນະພາບຊີວິດຂອງປະຊາຊົນ ເນື່ອງຈາກການພັດທະນາໂຄງສ້າງພື້ນຖານ ໃນບໍລິເວນອ້ອມຮອບ ເຂດວັດ.
- ສົ່ງເສີມເສດຖະກິດທ້ອງຖິ່ນໃຫ້ເຕີບໂຕຈົນຂະຫຍາຍໄປສູ່ທ້ອງຖິ່ນອື່ນເຊັ່ນ: ການນຳວັດຖຸດິບ ຈາກອີກທ້ອງຖິ່ນ ໜຶ່ງ ມາຈຳໜ່າຍໃນທ້ອງຖິ່ນອື່ນ.
- ສາມາດດຶງດູດນັກທ່ອງທ່ຽວທີ່ມາເທົ່ຽວຊົມວັດເພາະມາທຳບຸນ, ສິນລະປະການຕໍ່ສູ້ ແລະ ການທ່ຽວຊົມຮູບ ແບບສົ່ງເສີມສຸຂະພາບກາຍ ແລະ ສຸຂະພາບຈິດທີ່ດີເນື່ອງຈາກມີການຝຶກນັ່ງສະມາທິ ຊານ ແລະ ປັດຊະຍາ ການໃຊ້ຊີວິດ ສາມາດລົດພາລະຄ່າໃຊ້ຈ່າຍຂອງລັດດ້ານສາທາລະນະສຸກໃນໄລຍະຍາວ.

# XI. ແຜນການຈັດຕັ້ງປະຕິບັດແຕ່ລະໄລຍະ

## 1. ແຜນດຳເນີນງານໄລຍະຍາວ

| ລ/ດ | ລາຍການ | ໄລຍະການຈັດຕັ້ງປະຕິບັດ | ໝາຍເຫດ |
|---|---|---|---|
| 1 | ວັດເສົາຫຼີນ ປະຈຳ ສປປ ລາວ | ອີງຕາມໃບອະນຸຍາດ | |

## 2. ແຜນການດຳເນີນການໄລຍະປັດຈຸບັນ

- ດຳເນີນການຂໍອະນຸຍາດສ້າງຕັ້ງວັດເສົາຫຼິນ ປະຈຳ ສປປ ລາວ ກັບ ພາກສ່ວນທີ່ກ່ຽວຂ້ອງ.
- ດຳເນີນເອກະສານນິຕິກຳທີ່ກ່ຽວຂ້ອງໃຫ້ສຳເລັດຕາມເງື່ອນໄຂ.
- ດຳເນີນການສ້າງຕັ້ງວັດເສົາຫຼິນ ແລະ ປະຕິບັດຕາມແຜນໃນແຕ່ລະໄລຍະ.

ຂ້າພະເຈົ້າຜູ້ຕ່າງໜ້າຈາກ ວັດເສົາຫຼິນຊົງຊານ ສປ ຈີນ, ຂໍຢັ້ງຢືນວ່າທຸກຂໍ້ຄວາມ ແລະ ຂໍ້ມູນຕ່າງໆທີ່ໄດ້ລະບຸມາຂ້າງເທິງນັ້ນ ແມ່ນຖືກຕ້ອງ ແລະ ເປັນການຄາດຄະເນທີ່ໃກ້ຄຽງກັບຄວາມເປັນ ຈິງທຸກຢ່າງ.

ສະນັ້ນ, ຈຶ່ງຮຽນສະເໜີມາຍັງທ່ານເພື່ອຄົ້ນຄວ້າພິຈາລະນາຕາມເຫັນສົມຄວນດ້ວຍ.

ດ້ວຍຄວາມເຄົາລົບ ແລະ ນັບຖືຢ່າງສູງ

ທີ່ແຂວງບໍ່ແກ້ວ, ລົງວັນທີ 15 / 10 / 2025

**<u>ຜູ້ຕ່າງໜ້າ ຂອງວັດເສົາຫຼິນຊົງຊານ ສປ ຈີນ</u>**

郭喜祥

<u>ເອກະສານຄັດຕິດ:</u>

- ໃບມອບສິດ ຂອງທ່ານກົວ ຊີຊຽງ (Guo Xixiang) ຈາກ ວັດເສົາຫຼິນ ແຫ່ງພູຊົງຊານ ສປ ຈີນ.
- ຊີວະປະຫວັດ ຂອງທ່ານກົວ ຊີຊຽງ (Guo Xixiang).
- ບົດບັນທຶກຂໍ້ຕົກລົງຮ່ວມຍຸດທະສາດ ວັດເສົາຫຼິນຊົງຊານຂອງ ສປປ ຈີນ ແລະ ບໍລິສັດ ລາວ ທາດຫຼວງ ພັດທະນາຈຳກັດ ໃຫ້ການສະໜັບສະໜູນສະຖານທີ່ໃນການສ້າງຕັ້ງວັດເສົາຫຼິນ ປະຈຳ ສປປ ລາວ ຢູ່ເຂດເສດຖະກິດພິເສດ ບຶງທາດຫຼວງ.
- ໜັງສືຢັ້ງຢືນ ພື້ນທີ່ ທີ່ໃຫ້ການສະໜັບສະໜູນໃນການສ້າງສູນວັດທະນາທຳເສົາຫຼິນ ຢູ່ເຂດເສດຖະກິດພິເສດບຶງທາດຫຼວງ.

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

**ສູນວັດທະນາທຳເສົາຫຼິນລາວ**

**The Shaolin Cultural Center of Lao PDR**

# ບົດວິພາກເສດຖະກິດ

## ຂໍອະນຸຍາດສ້າງຕັ້ງສູນວັດທະນາທຳເສົາຫຼິນລາວ

## ຢູ່ ເຂດເສດຖະກິດພິເສດສາມຫຼ່ຽມຄຳ ເມືອງຕົ້ນເຜິ້ງ ແຂວງບໍ່ແກ້ວ ສປປ ລາວ

(ປະເພດອົງການຈັດຕັ້ງທີ່ບໍ່ສະແຫວງຫາຜົນກຳໄລ)

## ແຜນການຈັດຕັ້ງປະຕິບັດແຕ່ລະໄລຍະ

### 1. ແຜນດຳເນີນງານໄລຍະຍາວ

| ລ/ດ | ລາຍການ | ໄລຍະການຈັດຕັ້ງປະຕິບັດ | ໝາຍເຫດ |
|---|---|---|---|
| 1 | ຈັດຕັ້ງສູນວັດທະນະທຳເສົາຫຼິນລາວ | ອີງຕາມໃບອະນຸຍາດ | |

### 2. ແຜນການດຳເນີນການໄລຍະປັດຈຸບັນ

- ດຳເນີນການຂໍອະນຸຍາດສ້າງຕັ້ງສູນວັດທະນະທຳເສົາຫຼິນ ກັບ ພາກສ່ວນທີ່ກ່ຽວຂ້ອງ.
- ດຳເນີນເອກະສານນິຕິກຳທີ່ກ່ຽວຂ້ອງໃຫ້ສຳເລັດຕາມເງື່ອນໄຂ.
- ດຳເນີນການເປີດການຮຽນ-ການສອນ ແລະ ປະຕິບັດຕາມແຜນໃນແຕ່ລະໄລຍະ.

ຂ້າພະເຈົ້າຜູ້ຕ່າງໜ້າຈາກ ວັດເສົາຫຼິນຊົງຊານ ສປ ຈີນ, ຂໍຢັ້ງຢືນວ່າທຸກຂໍ້ຄວາມ ແລະ ຂໍ້ມູນຕ່າງໆທີ່ໄດ້ລະບຸມາຂ້າງເທິງນັ້ນ ແມ່ນຖືກຕ້ອງ ແລະ ເປັນການຄາດຄະເນທີ່ໃກ້ຄຽງກັບຄວາມເປັນຈິງທຸກຢ່າງ.

ສະນັ້ນ, ຈຶ່ງຮຽນສະເໜີມາຍັງທ່ານເພື່ອຄົ້ນຄວ້າພິຈາລະນາຕາມເຫັນສົມຄວນດ້ວຍ.

ດ້ວຍຄວາມເຄົາລົບ ແລະ ນັບຖືຢ່າງສູງ

ທີ່ແຂວງບໍ່ແກ້ວ, ລົງວັນທີ 15 / 10 / 2025

**ຜູ້ຕ່າງໜ້າ ຂອງວັດເສົາຫຼິນຊົງຊານ ສປ ຈີນ**

郭喜祥

<u>ເອກະສານຄັດຕິດ:</u>

- ໃບມອບສິດ ຂອງທ່ານກົວ ຊີຊຽງ (Guo Xixiang) ຈາກ ວັດເສົາຫຼິນ ແຫ່ງພູຊົງຊານ ສປ ຈີນ.
- ຊີວະປະຫວັດ ຂອງທ່ານກົວ ຊີຊຽງ (Guo Xixiang).
- ໜັງສືອະນຸຍາດ ຈາກ ກຸ່ມບໍລິສັດ ດອກງິ້ວຄຳ ໃຫ້ຈັດຕັ້ງສູນວັດທະນາທຳເສົ້າຫຼິນ ຢູ່ເຂດເສດຖະກິດພິເສດສາມຫຼ່ຽມຄຳ.
- ໜັງສືຢັ້ງຢືນ ບໍລິສັດ ທີ່ໃຫ້ການສະໜັບສະໜູນໃນການສ້າງສູນວັດທະນາທຳເສົ້າຫຼິນ ຢູ່ເຂດເສດຖະກິດພິເສດສາມຫຼ່ຽມຄຳ.

## IX. ຜົນປະໂຫຍດຂອງໂຄງການທີ່ມີຕໍ່ລັດ:

ລັດຈະໄດ້ຮັບຜົນປະໂຫຍດຈາກໂຄງການມີ 2 ດ້ານປະກອບມີ: ທາງກົງ ແລະ ທາງອ້ອມ

### 1. ຜົນປະໂຫຍດທາງກົງ

- ເພີ່ມທະວີສາຍພົວພັນມິດຕະພາບອັນເປັນມູນເຊື້ອ ແລະ ການແລກປ່ຽນວັດທະນາທຳລະຫວ່າງສອງປະເທດ ລາວ-ຈີນ.
- ເປັນການຝຶກອົບຮົມສ້າງຄວາມອາດສາມາດ ແລະ ພັດທະນາດ້ານສະມາທິຊານ ແລະ ສິລະປະການຕໍ່ສູ້ກັງຟູເສົາຫຼິນ ໃຫ້ແກ່ແກ່ນັກຮຽນ, ປະຊາຊົນລາວ ແລະ ຜູ້ທີ່ສົນໃຈ ຮຽນຮູ້ສິລະປະການຕໍ່ສູ້ກັງຟູເສົາຫຼິນ ໂດຍບໍ່ຕ້ອງເສຍຄ່າໃຊ້ຈ່າຍໃດໆໃນການເຂົ້າຮ່ວມຮຽນຮູ້.
- ການດຶງດູດນັກລົງທຶນທັງພາຍໃນ ແລະ ຕ່າງປະເທດ ໃນການລົງທຶນດ້ານທຸລະກິດການທ່ອງທ່ຽວຫຼາຍຂຶ້ນ ເຊັ່ນ: ລົງທຶນພັດທະນາດ້ານສະຖານທີ່ທ່ອງທ່ຽວ, ໂຮງແຮມ, ເຮືອນພັກ, ຮ້ານອາຫານ, ຮ້ານຂາຍເຄື່ອງຫັດຖະກຳ-ເຄື່ອງທີ່ລະນຶກ ແລະ ອື່ນໆ.
- ສົ່ງເສີມເສດຖະກິດທ້ອງຖິ່ນໃຫ້ດີຂຶ້ນເຊັ່ນ: ການຈ້າງງານ, ການກໍ່ສ້າງ, ການບໍລິຫານ, ຮ້ານອາຫານ, ໂຮງແຮມ, ການຂົນສົ່ງ ແລະ ປະຊາຊົນທ້ອງຖິ່ນ ໃຫ້ມີລາຍຮັບເພີ່ມຂຶ້ນຈາກການທ່ອງທ່ຽວ.
- ລາຍຮັບພາສີ ແລະ ຄ່າທຳນຽມຕ່າງໆ ຈາກນັກທ່ອງທ່ຽວຕ່າງຊາດ ຫຼື ຜູ້ທີ່ສົນໃຈກ່ຽວກັບ ສິລະປະການຕໍ່ສູ້ກັງຟູເສົາຫຼິນ ທີ່ເດີນທາງເຂົ້າມາທ່ຽວພາຍໃນ ສປປ ລາວ.

### 2. ຜົນປະໂຫຍດທາງອ້ອມ

- ສ້າງຊື່ສຽງ ໃຫ້ເປັນທີ່ຮູ້ຈັກໃຫ້ກັບ ສປປ ລາວ ຫຼາຍຂຶ້ນ.
- ເປັນການເສີມສ້າງຄວາມຮູ້, ຄວາມເຂົ້າໃຈໃຫ້ແກ່ຜູ້ທີ່ສົນໃຈທຸກຄົນທັງພາຍໃນ ແລະ ຕ່າງປະເທດໃນການປະຕິບັດທີ່ຖືກຕ້ອງຕາມຫຼັກຄຳສອນ.
- ການຝຶກຝົນຈະຊ່ວຍໃຫ້ຜູ້ຮຽນຮູ້ທຸກຄົນເກີດຄວາມສາມັກຄີເປັນຈິດໜຶ່ງໃຈດຽວກັນ.
- ສູນວັດທະນະທຳດັ່ງກ່າວຈະສ້າງກິດຈະກຳ ການກຸສົນເພື່ອສັງຄົມອັນສ້າງປະໂຫຍດ ທີ່ຈະຊ່ວຍໃຫ້ສົ່ງເສີມຄຸນນະພາບຊີວິດ ແລະ ຈິດສາອາສາໃນຊຸມຊົນ.

5. **ການບໍລິຫານຈັດການກອງທຶນສະເພາະ**

ເງິນກອງທຶນສະເພາະຕ້ອງໃຊ້ຕາມຈຸດປະສົງທີ່ກຳນົດໄວ້ ໂດຍມີຂະບວນການອະນຸມັດຢ່າງເຂັ້ມງວດ, ຫຼັງຈາກໄດ້ຮັບອະນຸຍາດຢ່າງເປັນທາງການ ຕ້ອງໄດ້ຈັດສັນງົບໃຫ້ໜ່ວຍງານດຳເນີນໂຄງການໂດຍໄວ ເພື່ອໃຫ້ການດຳເນີນງານມີປະສິດທິພາບ ຫ້າມໜ່ວຍງານ ຫຼື ບຸກຄົນອື່ນຫັກເງິນ ຫຼື ນຳເງິນໄປໃຊ້ນອກເໜືອທີ່ກຳນົດ ເພື່ອໃຫ້ໝັ້ນໃຈເງິນທຶນຖືກນຳໄປໃຊ້ເພື່ອພັດທະນາວັດທະນາທຳຕາມທີ່ກຳນົດໄວ້.

## VIII. ໂຄງຮ່າງການຈັດຕັ້ງ



ເງິນທຶນໃນການພັດທະນາໂຄງການ

| ລ/ດ | ລາຍການ | ທຶນໃນການພັດທະນາໂຄງການ (ເບື້ອງຕົ້ນ) |
|---|---|---|
| 1 | ສູນວັດທະນະທຳເສົາຫຼັກລາວ | 5,000-50,000,000 USD |

## VII. ແຜນການນຳໃຊ້ງົບປະມານ ແລະ ມາດຕະການຄຸ້ມຄອງ

ການບໍລິຫານງົບປະມານຂອງສູນວັດທະນາທຳເສົາຫຼັກ ເຂດເສດຖະກິດພິເສດສາມຫຼ່ຽມຄຳ ແມ່ນຍຶດຫຼັກຄວາມສາມັກໃຈ, ບໍ່ສະແຫວງຫາຜົນກຳໄລ່, ເປີດເຜີຍ ແລະ ຄວາມໂປ່ງໃສ ພ້ອມຮັບການກວດກາຈາກພາກລັດ ແລະ ສັງຄົມ.

### 1. ການຈົດທະບຽນຢ່າງຖືກຕ້ອງຕາມກົດໝາຍ

ສູນວັດເສົາຫຼັກສາມຫຼ່ຽມຄຳ ໄດ້ດຳເນີນການຈົດທະບຽນ ແລະ ຂໍອະນຸຍາດຕາມລະບຽບກົດໝາຍ ແລະ ນະໂຍບາຍທີ່ກ່ຽວຂ້ອງຂອງປະເທດລາວ ໂດຍດຳເນີນງານຕາມຂອບເຂດທີ່ໄດ້ຮັບອະນຸຍາດຢ່າງຖືກຕ້ອງ.

### 2. ການຈັດຕັ້ງຄະນະກຳມະການບໍລິຫານພາຍໃນ

ຄະນະກຳມະການຊຸດນີ້ປະກອບດ້ວຍຕົວແທນຈາກໜ່ວຍງານລັດຖະບານລາວ, ໜ່ວຍງານດ້ານສາດສະໜາ ແລະ ສູນວັດທະນາທຳເສົາຫຼັກ ໂດຍການໃຊ້ງົບປະມານທັງໝົດຕ້ອງໄດ້ຮັບອະນຸຍາດຈາກຄະນະກຳມະການ ເພື່ອໃຫ້ໝັ້ນໃຈວ່າງົບປະມານຖືກນຳໄປໃຊ້ເພື່ອພັດທະນາໂຄງການຈິງ ຫ້າມນຳໄປໃຊ້ຜິດວັດຖຸປະສົງ ຫຼື ເພື່ອສະແຫວງຫາກຳໄລສ່ວນຕົວ ສູນຈະເປີດເຜີຍລາຍລະອຽດຄ່າໃຊ້ຈ່າຍເປັນແຕ່ລະໄລຍະ ເພື່ອເກີດຄວາມໂປ່ງໃສ ແລະ ກວດສອບໄດ້.

### 3. ການຈັດຕັ້ງລະບົບຄຸ້ມຄອງດູແລການເງິນພາຍໃນ

ສູນວັດທະນາທຳຈະຈັດຕັ້ງຝ່າຍການເງິນ ພ້ອມສ້າງລະບົບການບໍລິຫານການເງິນ ແລະ ໂຄງສ້າງຄ່າຕອບແທນທີ່ເໝາະສົມ ແຕ່ລະໂຄງການຈະມີງົບປະມານສະເພາະ ແລະ ຈະຕ້ອງຜ່ານການອະນຸມັດຈາກຄະນະກຳມະການບໍລິຫານພາຍໃນ ເພື່ອໃຫ້ໝັ້ນໃຈວ່າເງິນທຶນໄດ້ຮັບການບໍລິຫານ ແລະ ໃຊ້ຈ່າຍຢ່າງມີປະສິດທິພາບ, ລາຍຈ່າຍທັງໝົດຈະຖືກບັນທຶກ ແລະ ລົງບັນຊີຢ່າງເປັນລະບົບ ພ້ອມກັບການກວດສອບຈາກໜ່ວຍງານທີ່ກ່ຽວຂ້ອງ.

### 4. ແຜນການນຳໃຊ້ງົບປະມານ

ເງິນທຶນທີ່ຈັດຫາໄດ້ຈະຖືກນຳໄປໃຊ້ໃນດ້ານຕ່າງໆ ເຊັ່ນ: ການກໍ່ສ້າງ ແລະ ຕົກແຕ່ງສະຖານທີ່, ການຈັດຊື້ອຸປະກອນສຳລັບກິດຈະກຳ, ການດຳເນີນກິດຈະກຳທາງວັດທະນາທຳປະຈຳວັນ, ການຝຶກອົບຮົມອາສາສະໝັກ ແລະ ການບຳລຸງຮັກສາທົ່ວໄປ. ໃນກໍລະນີເກີດໄພພິບັດ ຫຼື ນະໂຍບາຍໃໝ່ ຈະຈັດຕັ້ງກອງທຶນສະເພາະເພື່ອຮັບມືກັບສະຖານະການ ແລະ ຫຼຸດຜ່ອນຄວາມເສຍຫາຍ.

ຈາກທັນຍາພືດ 5 ຊະນິດ, ເພື່ອແຈກໃຫ້ປະຊາຊົນໂດຍບໍ່ເກັບຄ່າໃຊ້ຈ່າຍ. ທຸກປີໃນວັນທີ 10 ມັງກອນ (ວັນທີ່ອາດມີການປ່ຽນແປງໄດ້ໃນແຕ່ລະປີ) ເຊິ່ງຕົງກັບວັນທີ 08 ເດືອນ ທັນວາ ຈັນທະຣະຄະຕິໄດ້ຈັດກິດຈະກຳແຈກ "ເຂົ້າຕົ້ມລ້າປາເສົາຫຼິນ ຫຼື ເຂົ້າຕົ້ມທັນຍາພືດເສົາຫຼິນ" ເພື່ອລະນຶກເຖິງການຕັດສະຣູ້ຂອງພຣະພຸດທະເຈົ້າ ໃຫ້ປະຊາຊົນໄດ້ກິນເຂົ້າຕົ້ມດ້ວຍຄວາມຍິນດີ ເພື່ອຮັບຄວາມສຸກທາງໃຈ ແລະ ສ້າງສາຍສຳພັນທີ່ດີໃນສັງຄົມ.





## V. ຂໍ້ມູນທາງດ້ານເຕັກນິກຂອງໂຄງການ

ສູນວັດທະນະທຳເສົາຫຼິນໃນ ສປປ ລາວ ແມ່ນ ນຳໃຊ້ເນື້ອທີ່ທັງໝົດ 1,866 m2 ໄດ້ແຍກອອກເປັນ ສູນວັດທະນາທຳເສົາຫຼິນມີຂະໜາດເນື້ອທີ 286 m2 ແລະ ສະໜາມຝຶກຊ້ອມສີລະປະການຕໍ່ສີລະປະການຕໍ່ສູ້ກັງຟູເສົາຫຼິນ ມີຂະໜາດເນື້ອທີ່ 1,580 m2. ເຊິ່ງແມ່ນ ໄດ້ຮັບການສະໜັບສະໜູນສະຖານທີ່ສຳລັບຕັ້ງສູນວັດທະນາທຳເສົາຫຼິນໃນ ສປປ ລາວ ຈາກຈາກ ກຸ່ມບໍລິສັດ ດອກງິ້ວຄຳ ຈຳກັດ ທີ່ດຳເນີນທຸລະກິດໂຮງຮຽນດອກງິ້ວສາມຫຼ່ຽມຄຳ ເຂດເສດຖະກິດພິເສດສາມຫຼ່ຽມຄຳ. ລາຍລະອຽດເນື້ອທີ່ຕາມຮູບດັ່ງລຸ່ມນີ້:




ຮູບ: ຂອບເຂດເນື້ອທີ່ນຳໃຊ້ໃນການເຮັດສູນວັດທະນາທຳເສົາຫຼິນ ແລະ ສະໜາມຝຶກຊ້ອມ

5. **ການຊ່ວຍເຫຼືອຜູ້ທຸກຍາກ**

ໃຫ້ຄວາມຊ່ວຍເຫຼືອແກ່ເດັກທີ່ທຸກຍາກ ຜູ້ສູງອາຍຸທີ່ບໍ່ມີຄອບຄົວ ແລະ ເມຍທະຫານທີ່ເສຍຊີວິດ ຈັດຕັ້ງສະຖານທີ່ລ້ຽງເດັກກຳພ້າເພື່ອດູແລ ແລະ ອົບຮົມໃຫ້ເຂົາເຈົ້າເຕີບໃຫຍ່ເປັນຄົນທີ່ມີຄຸນນະພາບ ຈັດກິດຈະກຳຊ່ວຍເຫຼືອໃນເວລາເກີດໄພທຳມະຊາດ ອຸບັດຕິເຫດຮ້າຍແຮງ ຫຼື ເຫດການສຸກເສີນ ໂດຍໃຊ້ເງິນບໍລິຈາກເພື່ອດຳເນີນການຊ່ວຍເຫຼືອ ເພື່ອຫຼຸດຄວາມເສຍຫາຍທີ່ເກີດຈາກໄພພິບັດນັ້ນ.





6. **ກິດຈະກຳສາທາລະນະປະໂຫຍດ**

ສູນວັດທະນາທຳເສົາຫຼີນ ສາມາຄົມການກຸສົນໃນທ້ອງຖິ່ນ, ສາມາຄົມສາສະໜາ ແລະ ໜ່ວຍງານອື່ນໆ ຈັດກິດຈະກຳສາທາລະນະປະໂຫຍດເປັນແຕ່ລະໄລຍະ (ເຊັ່ນ: ການກວດຮັກສາສຸຂະພາບຟຣີແບບແພດແຜນຈີນທີ່ລວມເອົາສະມາທິ, ຝັງເຂັມ, ສະໝຸນໄພ ແລະ ການດູແລສຸຂະພາບແບບລວມ, ການບໍລິຈາກສິ່ງຂອງ, ອາຫານ, ເງິນທຶນ ຫຼື ອຸປະກອນ ແລະ ຊ່ວຍສ້ອມແປງບ້ານໃຫ້ຜູ້ຍາກຈົນ) ເພື່ອປະຕິບັດຕາມແນວຄິດ "ເຊື່ອມໂຍງດ້ວຍຄວາມຮັກ ທົ່ວໂລກເປັນຄອບຄົວດຽວກັນ" ແລະ ມີເປົ້າໝາຍເຜີຍແຜ່ແນວຄິດຄວາມເມດຕາ, ຄວາມກົມກຽວ, ຄວາມສາມັກຄີ ແລະ ຄວາມເທົ່າທຽມ ຈາກວັດທະນາທຳເສົາຫຼີນ ໃຫ້ຊາວບ້ານໃນທ້ອງຖິ່ນໄດ້ຮັບຜົນປະໂຫຍດຈາກສິ່ງເຫຼົ່ານັ້ນ.





7. **ກິດຈະກຳເຮັດບຸນແຈກທານ**

ຈັດກິດຈະກຳເຮັດບຸນຕາມລະດູການ ແລະ ເທດສະການຕ່າງໆ ເຊັ່ນ: ການລ້ຽງອາຫານຮ້ອນໃນວັນຄຣິດສະມາສ, ການແຈກເຂົ້າຕົ້ມບຸນ, ການແຈກອາຫານມັງສະວິລັດ ໂດຍພິເສດ "ການແຈກເຂົ້າຕົ້ມລ້າປາ ຫຼື ເຂົ້າຕົ້ມທັນຍາພືດ" ເຊິ່ງຈັດໃນວັນທີ 08 ເດືອນທັນວາ ຕາມປະຕິທິນຕີຈີນ ເພື່ອລະນຶກເຖິງວັນທີ່ພຣະພຸດທະເຈົ້າໄດ້ຕັດສະຣູ້ໃຕ້ຕົ້ນໂພ ຫຼັງຈາກບຳເພັນພຽງຢ່າງໜັກເປັນເວລາ 6 ປີ, ພຣະອົງເຄີຍໄດ້ຮັບເຂົ້າຕົ້ມຈາກຜູ້ຍິງລ້ຽງງົວເພື່ອສັນອາຫານກ່ອນຕັດສະຣູ້, ດັ່ງນັ້ນໃນວັນທີ 08 ເດືອນທັນວາ ຂອງທຸກປີ, ວັນພຸດທະສາສະໜາຈະຕົ້ມເຂົ້າ

3. **ກິດຈະກຳການແລກປ່ຽນວັດທະນາທຳ ການນັ່ງສະມາທິຊານ ແລະ ສິລະປະການຕໍ່ສູ້ກັງຟູ**

ຜ່ານການຝຶກອົບຮົມ ແລະ ຝຶກຝົນ, ສາມາດຈັດກິດຈະກຳແລກປ່ຽນວັດທະນາທຳ "ການນັ່ງສະມາທິຊານ ແລະ ສິລະປະການຕໍ່ສູ້ກັງຟູ" ໄດ້ເຊັ່ນ: ຈັດການບັນຍາຍ ເພື່ອເຜີຍແຜ່ຄວາມຮູ້ກ່ຽວກັບ ວັດທະນາທຳ ການນັ່ງສະມາທິຊານ ແລະ ສິລະປະການຕໍ່ສູ້ກັງຟູຂອງວັດເສົາຫຼິນ ແລະ ລະດົມຄວາມສາມັກຄີໃນສັງຄົມ ເພື່ອຈັດກິດຈະກຳຊ່ວຍເຫຼືອເພື່ອການກຸສົນ.





4. **ກິດຈະກຳຝຶກອົບຮົມອາຊີບສິລະປະການຕໍ່ສູ້ກັງຟູເສົາຫຼິນ**

ໃຊ້ທັກສະການຕໍ່ສູ້ຈິງ ແລະ ວິທີການຝຶກຝົນທີ່ເປັນເອກະລັກຂອງກັງຟູເສົາຫຼິນ ເພື່ອເປີດສອນຫຼັກສູດການຝຶກອົບຮົມວິຊາຊີບດ້ານການຮັກສາຄວາມປອດໄພ ເປີດຮັບສະໝັກບຸກຄົນທົ່ວໄປເຂົ້າຝຶກອົບຮົມເພື່ອເປັນເຈົ້າໜ້າທີ່ຮັກສາຄວາມປອດໄພກ່ອນເລີ່ມວຽກ ເພື່ອຍົກລະດັບຄຸນນະພາບບຸກຄະລາກອນໃນດ້ານນີ້ໃຫ້ຕອບສະໜອງຄວາມຕ້ອງການຂອງສັງຄົມ. ພ້ອມສ້າງຄວາມຮ່ວມມືກັບໜ່ວຍງານຮັກສາຄວາມປອດໄພຕ່າງໆ ເພື່ອເປີດໂອກາດໃຫ້ນັກຮຽນໄດ້ຝຶກງານ ແລະ ມີຊ່ອງທາງໃນການປະກອບອາຊີບໄດ້ງານຫຼັງຈາກຈົບຫຼັກສູດ, ພ້ອມຍັງສົ່ງເສີມໃຫ້ການຝຶກອົບຮົມດ້ານຄວາມປອດໄພໃຫ້ໄດ້ມາດຕະຖານ ແລະ ເປັນລະບົບ.







2 **ການຝຶກອົບຮົມກິດຈະກຳການສະແດງຂອງນັກຮຽນ.**

ຈັດຕັ້ງຈັດແຜນການຝຶກຊ້ອມກິດຈະກຳການສະແດງຕ່າງໆ ແລະ ການຝຶກຝົນຢ່າງສະໝ່ຳສະເໝີ, ສ້າງສັນການສະແດງກັງຟູທີ່ໜ້າຕື່ນຕາຕື່ນໃຈ ແລະ ຈັດກຸ່ມນັກຮຽນເຂົ້າຮ່ວມກິດຈະກຳການສະແດງກັງຟູຕ່າງໆ, ການສະແດງສິລະປະ ແລະ ວັດທະນາທຳ, ກິດຈະກຳວັດທະນາທຳຊຸມຊົນເປັນຕົ້ນ ເພື່ອສະແດງຄວາມສາມາດດ້ານສິລະປະການຕໍ່ສູ້ກັງຟູຂອງນັກຮຽນທັງທີ່ໄດ້ຮັບການຝຶກອົບຮົມແລ້ວ.





**ຮູບ: ອາຄານຕຶກຮຽນພາຍໃນສຳລັບການຮຽນການສອນ**





## III. ຮູບແບບການລົງທຶນ

### 1. ຮູບແບບການລົງທຶນຂອງໂຄງການ

ຮູບແບບການລົງທຶນແມ່ນ ເປັນປະເພດອົງການຈັດຕັ້ງທີ່ບໍ່ສະແຫວງຫາຜົນກຳໄລ.

### 2. ແຫຼ່ງທີ່ມາເງິນທຶນຂອງໂຄງການ

ເງິນທຶນຂອງໂຄງການສ່ວນໃຫຍ່ໄດ້ຮັບຈາກ ການບໍລິຈາກຂອງຜູ້ທີ່ມີຈິດສັດທາທັງພາຍໃນ ແລະ ຕ່າງປະເທດ ລວມເຖິງເງິນຈາກກິດຈະກຳການກຸສົນຕ່າງໆ. ໃນໄລຍະເລີ່ມຕົ້ນຂອງໂຄງການ ເງິນທຶນຫຼັກໄດ້ມາຈາກການບໍລິຈາກຂອງຜູ້ສັດທາໃນສູນວັດທະນາທຳເສົາຫຼິນ, ການບໍລິຈາກຜູ້ມີຈິດສັດທາທາງສັງຄົມ, ການບໍລິຈາກຈາກສູນວັດທະນາທຳເສົາຫຼິນກວ່າ 160 ແຫ່ງທົ່ວໂລກ, ແລະ ຈາກສິດເສົາຫຼິນກວ່າ 60 ລ້ານຄົນ. ນອກຈາກນີ້, ຍັງໄດ້ຮັບການສະໜັບສະໜູນຈາກມູນນິທິພຸດທະສາສະໜາຊາດຂອງຈີນ, ຄະນະກຳມະການບໍລິຫານກອງທຶນພັດທະນາວັດທະນາທຳພຸດທະສາດສະໜາຈີນ, ວັດເສົາຫຼິນ ແລະ ມູນນິທິອື່ນໆ. ລວມເຖິງການສະໜັບສະໜູນຈາກບໍລິສັດຕ່າງໆເຊັ່ນ: ບໍລິສັດ ລາວ ທາດຫຼວງ ລົງທຶນ ພັດທະນາ ຈຳກັດ, ກຸ່ມບໍລິສັດ ດອກງິ້ວຄຳ ຈຳກັດ, ແລະ ພັນທະມິດທຸລະກິດໃນສັງຄົມ ແລະ ອົງການຕ່າງໆ ທີ່ຮ່ວມມືກັນໃນການສະໜັບສະໜູນທາງການເງິນເພື່ອການກໍ່ສ້າງໂຄງການ ແລະ ກິດຈະກຳຕ່າງໆ.

## IV. ແຜນການດຳເນີນກິດຈະກຳ

ແຜນການເຮັດວຽກ ແບ່ງອອກເປັນ 7 ພາກສ່ວນຄື:

### 1. ຫຼັກສູດການສອນຟຣີ

ນີ້ແມ່ນໂຄງການຮ່ວມມືລະລະຫວ່າງສູນວັດທະນາທຳເສົາຫຼິນ ແລະ ໂຮງຮຽນດອກງິ້ວສາມຫຼ່ຽມຄຳ ເພື່ອເປີດຫຼັກສູດພາຍໃນສູນວັດທະນາທຳເສົາຫຼິນໂດຍບໍ່ຕ້ອງເສຍຄ່າໃຊ້ຈ່າຍໃດໆ ຫຼັກສູດນີ້ແມ່ນແບບຜະສົມຜະສານລະຫວ່າງ ສະມາທິຊານ ແລະ ສິລະປະການຕໍ່ສູ້ກັງຟູເສົາຫຼິນ. ໂດຍນຳເອົາພຣະຜູ້ຊ່ຽວສານດ້ານສິລະປະການຕໍ່ສູ້ຈາກສູນວັດທະນາທຳເສົາຫຼິນມາສອນ ເນັ້ນເສີມສ້າງສຸຂະພາບທີ່ດີໃຫ້ນັກຮຽນ ແລະ ປູກຝັງຄວາມສົນໃຈໃນກັງຟູ ແລະ ການພັດທະນາທັກສະທາງຮ່າງກາຍ.

## ທີ່ຕັ້ງໂຄງການ

ປັດຈຸບັນປະເທດລາວໄດ້ຈັດຕັ້ງເຂດເສດຖະກິດພິເສດເປັນ 21 ເຂດ ໂດຍມີເປົ້າໝາຍເພື່ອສົ່ງເສີມການລົງທຶນພັດທະນາອຸດສາຫະກຳການທ່ອງທ່ຽວ ແລະ ການຄ້າລະຫວ່າງປະເທດ. ໂຄງການແມ່ນຕັ້ງຢູ່ໃນເຂດເສດຖະກິດພິເສດສາມຫຼ່ຽມຄຳ, ແຂວງບໍ່ແກ້ວ. ຢູ່ລະຫວ່າງເສັ້ນ ຂະໜານທີ່ 20° 20'51.4" N ແລະ ເສັ້ນແວງ 100° 06'24.3" ສຳລັບສະຖານທີ່ໃນການຕັ້ງສູນວັດທະນາທຳວັດເສົາຫຼິນແມ່ນ ໄດ້ຮັບການສະໜັບສະໜູນຈາກ ກຸ່ມບໍລິສັດ ດອກງິ້ວຄຳ ຈຳກັດ ຢູ່ບ້ານສີບຸນເຮືອງ, ເມືອງຕົ້ນເຜິ້ງ, ແຂວງບໍ່ແກ້ວ ເຊິ່ງເປັນຜູ້ພັດທະນາເຂດເສດຖະກິດພິເສດສາມຫຼ່ຽມຄຳ, ແຂວງບໍ່ແກ້ວ. ໄດ້ຈັດສະຖານທີ່ໃຫ້ສູນຕັ້ງຢູ່ຕຶກອາຄານຮຽນຂອງ ໂຮງຮຽນດອກງິ້ວສາມຫຼ່ຽມຄຳ. ລາຍລະອຽດດັ່ງລຸ່ມນີ້:

**ຮູບ: ຂອບເຂດເນື້ອທີ່ນຳໃຊ້ໃນການຕັ້ງສູນວັດທະນາທຳເສົາຫຼິນ ແລະ ສະໜາມຝຶກຊ້ອມ**




**ຮູບ: ອາຄານຕຶກຮຽນພາຍນອກສຳລັບການຮຽນການສອນ**





## ■. ຊື່ໂຄງການ ແລະ ຈຸດທີ່ຕັ້ງຂອງໂຄງການ

**ຊື່ໂຄງການ:** ສູນວັດທະນາທຳເສົາຫຼິນລາວ

**Project name:** The Shaolin Cultural Center of Lao PDR

**ກິດຈະການ:** ສູນວັດທະນາທຳເສົາຫຼິນລາວ (ປະເພດອົງການຈັດຕັ້ງທີ່ບໍ່ສະແຫວງຫາຜົນກຳໄລ)

**ຜູ້ໄດ້ຮັບມອບສິດຂໍສ້າງຕັ້ງ:**

- ຊື່ ແລະ ນາມສະກຸນ: ທ່ານ ກົວ ຊີຊຽງ (Guo Xixiang), ອາຍຸ: 57 ປີ, ສັນຊາດ: ຈີນ, ອາຊີບ: ພະອາຈານ (ຜູ້ຖືກແຕ່ງຕັ້ງ ຈາກ ວັດເສົາຫຼິນ ແຫ່ງພູຊົງຊານ ສປ ຈີນ).
- ເບີໂທຕັ້ງໂຕະ/ມືຖື +86 13397811555 Wechat ID: sls13397811555
- ທີ່ຢູ່ປັດຈຸບັນ: ໂຮງຮຽນສາມຫຼ່ຽມຄຳ, ເຂດເສດຖະກິດພິເສດສາມຫຼ່ຽມຄຳ, ເມືອງຕົ້ນເຜິ້ງ, ແຂວງບໍ່ແກ້ວ.
- ທີ່ຢູ່ຕ່າງປະເທດ: ເມືອງນານນິງ ເຂດປົກຄອງຕົນເອງກວ່າງຊີຈ້ວງ ສປ ຈີນ



## 1.2 ຈຸດປະສົງເປົ້າໝາຍ

- ເພື່ອເພີ່ມທະວີສາຍພົວພັນມິດຕະພາບ ແລະ ການແລກປ່ຽນວັດທະນະທຳ ລະຫວ່າງ ສປປ ລາວ ແລະ ສປ ຈີນ.
- ເພື່ອການສືບທອດ ແລະ ສົ່ງເສີມ ສິນລະປະການຕໍ່ສູ້ມວຍຈີນ (ກັງຟູເສົາຫຼີນ) ທີ່ເປັນມໍລະດົກທາງວັດທະນະທຳທີ່ຈັບຕ້ອງບໍ່ໄດ້ລະດັບຊາດຂອງ ສປ ຈີນ, ເຊິ່ງມີປະຫວັດສືບທອດມາເປັນເວລາ 1520 ປີ ໃຫ້ດຳລົງຢູ່ ແກ່ຄົນລຸ້ນໃໝ່.
- ເພື່ອຜັກດັນໃຫ້ກັງຟູເສົາຫຼີນກາຍເປັນ ຫຼັກສູດການສອນ ຂອງສູນວັດທະນະທຳເສົ້າຫຼີນ ທີ່ໜ້າດຶງດູດໃຫ້ແກ່ນ້ອງນັກຮຽນຂອງໂຮງຮຽນ ດອກງິ້ວສາມຫຼ່ຽມຄຳ ແລະ ຄົນທີ່ສົນໃຈ ເພື່ອເສີມສ້າງສຸຂະພາບ ແລະ ຄວາມແຂງແຮງຂອງຮ່າງກາຍ.
- ເພື່ອເປີດກວ້າງໃຫ້ມີ ການຮຽນ-ການສອນ, ການຝຶກອົບຮົມ ແລະ ການແລກປ່ຽນວັດທະນະທຳໃນການຝຶກຝົນກັງຟູເສົາຫຼີນແບບດັ້ງເດີມ ແລະ ຈັດໃຫ້ມີລະບົບການສອບເສັງກັງຟູເພື່ອຮັບຮອງລະດັບຄວາມສາມາດກັງຟູຂອງຜູ້ເຂົ້າຮ່ວມຝຶກຝົນ ທັງນັກຮຽນພາຍໃນໂຮງຮຽນ ແລະ ຜູ້ທີ່ສົນໃຈ.
- ເພື່ອສົ່ງເສີມໃຫ້ ສປປ ລາວ ເປັນອີກສະຖານທີ່ສຳຄັນ (Landmark) ໃນ ອາຊຽນ.

- **ສູນວັດທະນະທຳເສົາຫຼິນອັງກິດ** ໄດ້ຈັດກິດຈະກຳ





- **ສູນວັດທະນະທຳເສົາຫຼິນໃນບາເຊໂລນາ, ປະເທດສະເປນ,** ໄດ້ຈັດກິດຈະກຳສຳຜັດປະສົບການ





- ສູນວັດທະນະທຳເສົາຫຼິນຊູຣິກໃນສະວິດເຊີແລນ ໄດ້ຈັດການສະແດງເສົາຫຼິນກັງຟູ




- **ສູນວັດທະນະທຳ ເສົາຫຼິນ ອອສເຕເລຍ** ໄດ້ຮັບການເຊື້ອເຊີນເຂົ້າຮ່ວມໃນການຕ້ອນຮັບ ການສ້າງ ຕັ້ງສາຍພົວພັນທາງການທູດ ຄົບຮອບ 50 ປີ



**奥地利少林文化中心应邀参加中奥建交50周年招待会活动**

发布日期：2021.09.27　　字体大小：大 中 小

2021年9月10日，中奥建交50周年、奥中友协成立50周年、《外交圈》杂志创刊50周年招待会在奥地利维也纳柏悦酒店(Park Hyatt Vienna)隆重举行。奥地利少林文化中心在负责人释延良法师的带领下，应邀参加招待会活动，并为现场嘉宾带来一场精彩的少林功夫展演。出席招待会活动的有：中国驻奥地利大使李晓驷，奥地利前总统、奥中友协主席菲舍尔，奥地利前副总理施宾德艾格，奥地利前国防部长法斯阿本德，30余国驻奥使节，奥中友协常务副主席卡明斯基夫妇，《外交圈》杂志主编菲尔维格、布尔斯基，中国驻奥公使衔参赞杨文旭、文化参赞陈平，华侨华人及中资企业代表等百余位嘉宾。招待会上，奥地利总理库尔茨专门发来视频贺辞。

- ສູນວັດທະນະທຳເສົາຫຼິນປະເທດອີຕາລີ້ ໄດ້ຈັດການຮຽນນອກຄ່າຍເສົາຫຼິນ







- ສູນວັດທະນະທຳເສົາຫຼິນຮັງກາຣີ ໄດ້ຈັດກິດຈະກຳແຈກໂຈ໊ກ ໃນເທດສະການລ່າປ່າ ໃຫ້ແກ່ຊາວພຸດ




虔诚祈福

ແຂງແຮງ, ການນັ່ງສະມາທິເພື່ອໃຫ້ຈິດໃຈປອດໂປ່ງ ແລະ ການປະສົມປະສານລະຫວ່າງ ວັດທະນະທຳການກິນເຈ ເຂົ້າໄປໃນຊຸມຊົນທ້ອງຖິ່ນ, ເພື່ອໃຫ້ໄດ້ຮັບຜົນປະໂຫຍດ ແລະ ສິ່ງຜົນດີຕໍ່ສຸຂະພາບທາງດ້ານຮ່າງກາຍ ແລະ ຈິດໃຈ ຂອງປະຊາຊົນ.

**ດ້ານລຸ່ມນີ້ແມ່ນຮູບພາບສະແດງໃຫ້ເຫັນກິດຈະກຳຂອງສູນວັດທະນະທຳເສົາຫຼິນໃນບັນດາປະເທດຕ່າງໆ:**

- **ສູນວັດທະນະທຳເສົາຫຼິນທີ່ລັດຄາລີຟໍເນຍໃຕ້ປະເທດສະຫະລັດອາເມລິກາ** ໄດ້ມອບສິ່ງຂອງບໍລິຈາກໃຫ້ແກ່ຫ້ອງການຕຳຫຼວດ ໃນທ້ອງຖິ່ນ




- **ສູນວັດທະນະທຳເສົາຫຼິນສິງກະໂປ**



## I. ສະພາບລວມຂອງໂຄງການ

### 1.1 ຄວາມເປັນມາຂອງໂຄງການ

**ວັດເສົາຫຼິນ** ຕັ້ງຢູ່ບໍລິເວນພູຊົງຊານຍອດພູຊົ່ງສານອູລູເຝີງ, ເມືອງເຕິງເຝີງ, ແຂວງເຫີນານ ສປ ຈີນ, ເຊິ່ງໃສ່ຊື່: "ວັດເສົາຫຼິນ" ເນື່ອງຈາກວ່າຕັ້ງຢູ່ພູເສົາສີ້ຊານເປັນພູເຂົາທີ່ອຸດົມສົມບູນປ່າໄມ້ໃນບໍລິເວນພູຊົງຊານ ເປັນວັດຕົ້ນກຳເນີດນິກາຍມະຫາຍານຂອງພຸດທະສາດສະໜາແບບຈີນ, ເຊິ່ງໄດ້ຮັບການຂະໜານນາມວ່າເປັນວັດທີ່ດັງທີ່ສຸດໃນໂລກ. ວັດເສົາຫຼິນເລີ່ມສ້າງຂຶ້ນໃນປີ 19 ຂອງລາຊະວົງ ເປີ່ຍເຫວີ່ຍ(ຄ.ສ 495) ແລະ ມີປະຫວັດສາດຫຼາຍກວ່າ 1,500 ປີ. ເຊິ່ງບໍ່ພຽງແຕ່ເປັນແຫຼ່ງກຳເນີດຂອງນິກາຍຫາຍານເທົ່ານັ້ນ, ແຕ່ຍັງເປັນແຫຼ່ງກຳເນີດກັງຟູເສົາຫຼິນ ເຊິ່ງເປັນທີ່ຮູ້ຈັກກັນດີໃນນາມວັດຕົ້ນກຳເນີດນິກາຍມະຫາຍານສະຖານທີ່ກັງຟູສັກສິດ.



**ຮູບ: ວັດເສົາຫຼິນ ແຂວງເຫີນານ ສປ ຈີນ**

**ສູນວັດທະນາທຳເສົາຫຼິນ** ເປັນອົງກອນສຳຄັນທີ່ສ້າງຂຶ້ນໂດຍວັດເສົາຫຼິນ,ເພື່ອຕອບສະໜອງນະໂຍບາຍ "ໜຶ່ງແລວໜຶ່ງເສັ້ນທາງ" ແລະ ເປັນອົງການສຳຄັນໃນການຊຸກຍູ້ການແລກປ່ຽນວັດທະນະທຳສາກົນ. ມາຮອດເດືອນທັນວາປີ 2023, ວັດເສົາຫຼິນໄດ້ສ້າງຕັ້ງສູນວັດທະນະທຳເສົາຫຼິນ ເກືອບ 200 ແຫ່ງ (ລວມທັງສາຂາ ແລະ ອົງການການຮ່ວມມື) ຫຼາຍກວ່າ 50 ປະເທດ ແລະ ພາກພື້ນໃນທົ່ວໂລກ. ໃນນັ້ນປະກອບມີ ຄາລີຟໍເນຍ, ສິງກະໂປ, ອົດສະຕຣາລີ, ຄານາດາ, ມາເລເຊຍແລະປະເທດອື່ນໆ, ເຊິ່ງໄດ້ສ້າງຕັ້ງ"ສູນວັດທະນະທຳເສົາຫຼິນ"ເກືອບສິບປີແລ້ວ. ສູນວັດທະນະທຳເສົາຫຼິນທົ່ວໂລກແມ່ນຈະສອດຄ່ອງກັບວັດທະນະທຳທ້ອງຖິ່ນ, ສົ່ງເສີມການນຳໃຊ້ສິລະປະການຕໍ່ສູ້ເພື່ອເສີມສ້າງຮ່າງກາຍໃຫ້

## ແຜນການຈັດຕັ້ງປະຕິບັດແຕ່ລະໄລຍະ

### 1. ແຜນດຳເນີນງານໄລຍະຍາວ

| ລ/ດ | ລາຍການ | ໄລຍະການຈັດຕັ້ງປະຕິບັດ | ໝາຍເຫດ |
|---|---|---|---|
| 1 | ຈັດຕັ້ງສູນວັດທະນະທຳເສົາຫຼີນລາວ | ອີງຕາມໃບອະນຸຍາດ | |

### 2. ແຜນການດຳເນີນການໄລຍະປັດຈຸບັນ

- ດຳເນີນການຂໍອະນຸຍາດສ້າງຕັ້ງສູນວັດທະນະທຳເສົາຫຼີນ ກັບ ພາກສ່ວນທີ່ກ່ຽວຂ້ອງ.
- ດຳເນີນເອກະສານນິຕິກຳທີ່ກ່ຽວຂ້ອງໃຫ້ສຳເລັດຕາມເງື່ອນໄຂ.
- ດຳເນີນການເປີດການຮຽນ-ການສອນ ແລະ ປະຕິບັດຕາມແຜນໃນແຕ່ລະໄລຍະ.

ຂ້າພະເຈົ້າຜູ້ຕ່າງໜ້າຈາກ ວັດເສົາຫຼີນຊົນຊານ ສປ ຈີນ, ຂໍຢັ້ງຢືນວ່າທຸກຂໍ້ຄວາມ ແລະ ຂໍ້ມູນຕ່າງໆທີ່ໄດ້ລະບຸມາຂ້າງເທິງນັ້ນ ແມ່ນຖືກຕ້ອງ ແລະ ເປັນການຄາດຄະເນທີ່ໃກ້ຄຽງກັບຄວາມເປັນຈິງທຸກຢ່າງ.

ສະນັ້ນ, ຈຶ່ງຮຽນສະເໜີມາຍັງທ່ານເພື່ອຄົ້ນຄວ້າພິຈາລະນາຕາມເຫັນສົມຄວນດ້ວຍ.

ດ້ວຍຄວາມເຄົາລົບ ແລະ ນັບຖືຢ່າງສູງ

ທີ່ແຂວງບໍ່ແກ້ວ, ລົງວັນທີ 15 / 10 / 2025

<u>ຜູ້ຕ່າງໜ້າ ຂອງວັດເສົາຫຼີນຊົນຊານ ສປ ຈີນ</u>

郭喜祥

<u>ເອກະສານຄັດຕິດ:</u>

- ໃບມອບສິດ ຂອງທ່ານກົວ ຊີຊຽງ (Guo Xixiang) ຈາກ ວັດເສົາຫຼີນ ແຫ່ງພູຊົງຊານ ສປ ຈີນ.
- ຊີວະປະຫວັດ ຂອງທ່ານກົວ ຊີຊຽງ (Guo Xixiang).
- ໜັງສືອະນຸຍາດ ຈາກ ກຸ່ມບໍລິສັດ ດອກງິ້ວຄຳ ໃຫ້ຈັດຕັ້ງສູນວັດທະນາທຳເສົ້າຫຼິນ ຢູ່ເຂດເສດຖະກິດພິເສດສາມຫຼ່ຽມຄຳ.
- ໜັງສືຢັ້ງຢືນ [illegible] ທີ່ໃຫ້ການສະໜັບສະໜູນໃນການສ້າງສູນວັດທະນາທຳເສົ້າຫຼິນ ຢູ່ເຂດເສດຖະກິດພິເສດສາມຫຼ່ຽມຄຳ.